4. ເພື່ອຊຸກຍູ້ການພົວພັນໃນດ້ານເສດຖະກິດ, ການຄ້າ, ສັງຄົມ ແລະ ວັດຖະນະທຳ ລະຫວ່າງ ບັນດາແຂວງຊາຍແດນ ຂອງສອງປະເທດ, ປະກອບສ່ວນເຂົ້າໃນການສ້າງດ່ານຊາຍແດນລາວ-ຫວຽດນາມ ໃຫ້ກາຍເປັນດ່ານແຫ່ງການແລກປ່ຽນຊື້ຂາຍ, ມີຄວາມສະຫງົບ, ໝັ້ນຄົງ, ມິດຕະພາບ, ການຮ່ວມມື ແລະ ພັດທະນາແບບຍືນຍົງ.

5. ເພື່ອເພີ່ມທະວີການພັດທະນາເສດຖະກິດ-ສັງຄົມ ແລະ ການລົບລ້າງຄວາມທຸກຍາກ, ໂດຍສະເພາະແມ່ນ ປະຊາຊົນຊົນເຜົ່າທີ່ອາໄສຢູ່ຕາມພູດອຍ, ຫ່າງໄກຊອກຫຼີກ ແລະ ເຂດຊາຍແດນ ລະຫວ່າງ ສອງປະເທດ, ປະກອບສ່ວນເຂົ້າໃນການຮັກສາຄວາມປອດໄພ, ປ້ອງກັນຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ຕາມແລວຊາຍແດນ ລະຫວ່າງ ສປປ ລາວ ແລະ ຫວຽດນາມ.

ມາດຕາ 2
ການຄ້າຊາຍແດນ

ການຄ້າຊາຍແດນ ທີ່ນິຍາມໃນສັນຍາສະບັບນີ້ ໝາຍເຖິງ:

1. ການຊື້ ແລະ ການຂາຍ ຫຼື ການແລກປ່ຽນສິນຄ້າຂອງພໍ່ຄ້າ
2. ການຊື້ ແລະ ການຂາຍ ຫຼື ການແລກປ່ຽນສິນຄ້າຂອງປະຊາຊົນຊາຍແດນ
3. ການຊື້ ແລະ ການຂາຍ ຫຼື ການແລກປ່ຽນສິນຄ້າຂອງພໍ່ຄ້າ ແລະ ປະຊາຊົນຊາຍແດນ ຢູ່ຕະຫຼາດຊາຍ ແດນ
4. ກິດຈະກຳທີ່ສະໜັບສະໜຸນບໍລິການສຳລັບການຄ້າຊາຍແດນ ແລະ ການອຳນວຍຄວາມສະດວກທາງ ດ້ານການຄ້າຢູ່ຕາມດ່ານຊາຍແດນ

ມາດຕາ 3
ບັນດາດ່ານຊາຍແດນທີ່ເປີດເພື່ອການຄ້າ

ສອງຝ່າຍຕົກລົງປະເພດດ່ານຊາຍແດນ ເພື່ອເປີດໃຫ້ແກ່ການເຄື່ອນໄຫວວຽກງານການຄ້າ ຊຶ່ງໄດ້ລະບຸດັ່ງນີ້:

1. ດ່ານສາກົນ ແມ່ນດ່ານທີ່ເປີດໃຫ້ແກ່ການເຂົ້າອອກຂອງສິນຄ້າ, ຍານພາຫະນະ, ຄົນລາວ, ຄົນຫວຽດນາມ ແລະ ບຸກຄົນປະເທດອື່ນໆ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງແຕ່ລະປະເທດ ແລະ ສັນຍາສອງຝ່າຍ ແລະ ຫຼາຍຝ່າຍ ທີ່ ສປປ ລາວ ແລະ ສສ ຫວຽດນາມ ເປັນພາຄີ.
2. ດ່ານທ້ອງຖິ່ນຂອງ ສປປ ລາວ ແລະ ດ່ານແຫ່ງຊາດຂອງຫວຽດນາມ ແມ່ນດ່ານທີ່ເປີດໃຫ້ແກ່ການເຂົ້າອອກ ຂອງສິນຄ້າ, ຍານພາຫະນະ, ຄົນລາວ ແລະ ຄົນຫວຽດນາມ ໂດຍປະຕິບັດຕາມລະບຽບ, ກົດໝາຍ ຂອງແຕ່ລະ ປະເທດ ແລະ ສັນຍາສອງຝ່າຍທີ່ໄດ້ລົງນາມກັນ.
3. ດ່ານປະເພນີຂອງ ສປປ ລາວ ແລະ ດ່ານສຳຮອງ ຫຼື ຈຸດຂ້າມລອຍປະເພນີຂອງຫວຽດນາມ ແມ່ນດ່ານທີ່ເປີດ ເພື່ອການເຂົ້າອອກຂອງສິນຄ້າ, ຍານພາຫະນະ ແລະ ປະຊາຊົນ ທີ່ອາໃສຢູ່ແຂວງຊາຍແດນຂອງ ສປປ ລາວ ແລະ ຫວຽດນາມ ໂດຍປະຕິບັດຕາມລະບຽບ ແລະ ກົດໝາຍຂອງແຕ່ລະປະເທດ.

ມາດຕາ 4
ການຊື້ ແລະ ການຂາຍ ຫຼື ການແລກປ່ຽນສິນຄ້າຂອງພໍ່ຄ້າຊາຍແດນ

1. ພໍ່ຄ້າ ທີ່ເຮັດການຄ້າຊາຍແດນ ແລະ ຕ້ອງການໄດ້ຮັບການປະຕິບັດແບບພິເສດ ຕ້ອງໄດ້ລົງທະບຽນກັບ ພາກສ່ວນທີ່ກ່ຽວຂ້ອງຢູ່ຂັ້ນແຂວງຂອງແຕ່ລະປະເທດ, ພາຍຫຼັງຜ່ານການກວດກາຢ່າງລະອຽດ, ຂັ້ນຕອນ

ອະນຸຍາດການຄ້າຊາຍແດນຕ່າງໆ, ແມ່ນຈະອອກອະນຸຍາດໃຫ້ເຮັດການຄ້າຊາຍແດນ ໂດຍໃຫ້ສອດຄ່ອງກັບ ລະບຽບ ແລະ ກົດໝາຍຂອງແຕ່ລະປະເທດ (ໃນສັນຍານີ້ໝາຍເຖິງພໍ່ຄ້າຊາຍແດນ).

2. ເຈົ້າໜ້າທີ່ກ່ຽວຂ້ອງຂັ້ນແຂວງ ຄວນເກັບກຳຂໍ້ມູນ ແລະ ແຈ້ງໃຫ້ແຕ່ລະຝ່າຍຮູ້ກ່ຽວກັບບັນຊີຂອງພໍ່ຄ້າທີ່ເຮັດ ການຄ້າດ້ານສິນຄ້າຢູ່ບັນດາແຂວງຊາຍແດນ.

3. ການຄ້າດ້ານສິນຄ້າຂອງພໍ່ຄ້າຢູ່ແຂວງຊາຍແດນ ຕ້ອງປະຕິບັດຜ່ານດ່ານທີ່ໄດ້ລະບຸໄວ້ໃນມາດຕາ 3 ຂອງສັນຍາ ສະບັບນີ້.

4. ພໍ່ຄ້າອື່ນໆ ທີ່ດຳເນີນການເຄື່ອນໄຫວການຄ້າດ້ານສິນຄ້າຢູ່ຊາຍແດນ ຕາມປະເພນີປະຕິບັດແບບສາກົນ ຕ້ອງ ສອດຄ່ອງກັບສັນຍາສາກົນທີ່ ສປປ ລາວ ແລະ ຫວຽດນາມເປັນພາສີ ແລະ ຕາມລະບຽບ ແລະ ກົດໝາຍຂອງແຕ່ ລະປະເທດ.

ມາດຕາ 5
ການຊື້ ແລະ ການຂາຍ ຫຼື ການແລກປ່ຽນສິນຄ້າ ຂອງປະຊາຊົນຊາຍແດນ.

1. ປະຊາຊົນທີ່ຕັ້ງພູມລຳເນົາຢູ່ເມືອງຊາຍແດນຂອງ ສປປ ລາວ ແລະ ຕາແສງ, ເຂດ ແລະ ເມືອງຊາຍແດນຂອງ ຫວຽດ ນາມ (ຕໍ່ໄປນີ້ເອີ້ນວ່າປະຊາຊົນຊາຍແດນ) ຕ້ອງເຮັດການຄ້າຂາຍຊາຍແດນໃຫ້ສອດຄ່ອງກັບລະບຽບ ແລະ ກົດໝາຍ ຂອງແຕ່ລະປະເທດ ແລະ ບົດບັນຍັດຂອງສັນຍາສະບັບນີ້.

2. ປະຊາຊົນຊາຍແດນ ຕ້ອງອະນຸຍາດໃຫ້ຖືສິນຄ້າຕິດຕົວທີ່ຍົກເວັ້ນພາສີ ຕາມລະບຽບກົດໝາຍຂອງແຕ່ລະ ປະເທດ.

3. ປະຊາຊົນຊາຍແດນ ຕ້ອງເຮັດການຄ້າຊາຍແດນດ້ານສິນຄ້າຜ່ານດ່ານຊາຍແດນທີ່ໄດ້ລະບຸໄວ້ໃນມາດຕາ 3 ຂອງສັນຍາສະບັບນີ້.

4. ສິນຄ້າທີ່ຜະລິດ, ສັດທີ່ລ້ຽງ ແລະ ພືດອຸດສາຫະກຳ ທີ່ປູກໂດຍປະຊາຊົນເມືອງຊາຍແດນຂອງ ສປປ ລາວ ແລະ ໄດ້ຢັ້ງຢືນໂດຍເຈົ້າໜ້າທີ່ກ່ຽວຂ້ອງຂອງ ສປປ ລາວ, ລວມທັງການຢັ້ງຢືນສຸຂະນາໄມ ສຸຂະນາໄມພືດ ແລະ ສັດ ຕ້ອງໄດ້ຮັບການຍົກເວັ້ນພາສີນຳເຂົ້າ ແລະ ອາກອນອື່ນໆ ເວລານຳເຂົ້າໄປຫວຽດນາມ, ແລະ ຕ້ອງບໍ່ໃຫ້ມີ ການຂໍໃບອະນຸຍາດນຳເຂົ້າຕ່າງໆ, ບໍ່ຕ້ອງຜ່ານການກວດກາ ສຸຂະນາໄມ ສຸຂະນາໄມພືດ ແລະ ສັດ, ມາດຕະການ ເຕັກນິກ ແລະ ກວດກາຄວາມປອດໄພດ້ານອາຫານ, ຍົກເວັ້ນໃນກໍລະນີທີ່ມີການແຈ້ງເຕືອນຂອງເຈົ້າໜ້າທີ່ຝ່າຍ ໃດຝ່າຍໜຶ່ງຂອງຄູ່ສັນຍາ ກ່ຽວກັບຄວາມສ່ຽງຂອງສິນຄ້າສະເພາະໃດໜຶ່ງ.

ມາດຕາ 6
ສິນຄ້າທີ່ຍົກເວັ້ນພາສີອາກອນນຳເຂົ້າ

1. ຫວຽດນາມ ຕ້ອງໃຫ້ບຸລິມະສິດອັດຕາພາສີ 0% ແກ່ສິນຄ້າທີ່ມີແຫລ່ງກຳເນີດຈາກ ສປປ ລາວ, ທີ່ໄດ້ ລະບຸຢູ່ໃນເອກະສານຊ້ອນທ້າຍ 01 ຂອງສັນຍາສະບັບນີ້. ເຈົ້າໜ້າທີ່ການຄ້າຂອງ ສປປ ລາວ ຕ້ອງອອກໃບຢັ້ງຢືນ ແຫລ່ງກຳເນີດ ສຳລັບສິນຄ້ານຳເຂົ້າໄປຫວຽດນາມ.

2. ສປປ ລາວ ອາດຈະພິຈະລະນາໃຫ້ສິດທິພິເສດທາງດ້ານພາສີນຳເຂົ້າໃນອັດຕາ 0% ໃຫ້ແກ່ສິນຄ້າທີ່ມີ ແຫລ່ງກຳເນີດຈາກຫວຽດນາມ.

ມາດຕາ 7

ການນຳເຂົ້າສິນຄ້າໄປຫວຽດນາມ ພາຍໃຕ້ການລົງທຶນຂອງນັກລົງທຶນຫວຽດນາມ

1. ລາຍການສິນຄ້າກະສິກຳທີ່ຜະລິດ ແລະ ຍັງບໍ່ທັນປຸງແຕ່ງ, ສັດທີ່ລ້ຽງ ແລະ ພືດອຸດສາຫະກຳທີ່ປູກໂດຍ ປະຊາຊົນ ແລະ ນັກທຸລະກິດ ທີ່ອາໄສຢູ່ແຂວງຊາຍແດນຂອງ ສປປ ລາວ ພາຍໃຕ້ການລົງທຶນຂອງນັກລົງທຶນ ຫວຽດນາມ ໂດຍສອດຄ່ອງກັບລະບຽບ ແລະ ກົດໝາຍ ຂອງແຕ່ລະຝ່າຍ ຕ້ອງໄດ້ຮັບການຍົກເວັ້ນອັດຕາພາສີນຳ ເຂົ້າ ແລະ ອາກອນມູນຄ່າເພີ່ມ ເມື່ອນຳເຂົ້າຫວຽດນາມ ຕາມທີ່ໄດ້ລະບຸຢູ່ເອກະສານຊ້ອນທ້າຍ 2 ຂອງສັນຍາ ສະບັບນີ້.

2. ລາຍການສິນຄ້າທີ່ຜະລິດ, ສັດທີ່ລ້ຽງ, ແລະ ພືດອຸດສາຫະກຳທີ່ປູກໂດຍປະຊາຊົນ ແລະ ນັກທຸລະກິດ ທີ່ອາໄສ ຢູ່ແຂວງຊາຍແດນຂອງ ສປປ ລາວ ພາຍໃຕ້ການລົງທຶນຂອງນັກລົງທຶນຫວຽດນາມ ໂດຍສອດຄ່ອງກັບລະບຽບ ແລະ ກົດໝາຍຂອງແຕ່ລະຝ່າຍ ຕ້ອງໄດ້ຮັບການຍົກເວັ້ນອັດຕາພາສີຂາເຂົ້າເມື່ອນຳເຂົ້າຫວຽດນາມ ຕາມທີ່ໄດ້ ລະບຸໄວ້ໃນເອກະສານຊ້ອນທ້າຍ 3 ຂອງສັນຍາສະບັບນີ້.

3. ສິນຄ້າທີ່ຜະລິດ, ສັດທີ່ລ້ຽງ ແລະ ພືດອຸດສາຫະກາທີ່ປູກໂດຍປະຊາຊົນ ແລະ ນັກທຸລະກິດ ທີ່ອາໄສຢູ່ແຂວງ ຊາຍແດນຂອງ ສປປ ລາວ ພາຍໃຕ້ການລົງທຶນຂອງນັກລົງທຶນຫວຽດນາມ ໂດຍສອດຄ່ອງກັບລະບຽບ ແລະ ກົດ ໝາຍຂອງແຕ່ລະຝ່າຍ ຕ້ອງບໍ່ມີການຈຳກັດໂກຕາ ແລະ ການອະນຸຍາດນຳເຂົ້າອື່ນໆ (ຖ້າມີ) ເມື່ອນຳເຂົ້າ ຫວຽດນາມ.

ມາດຕາ 8

ການພັດທະນາຕະຫຼາດຊາຍແດນ

1. ສອງຝ່າຍເຫັນດີໃນການສົ່ງເສີມການລົງທຶນ ເພື່ອພັດທະນາຕະຫຼາດຊາຍແດນ ດັ່ງທີ່ໄດ້ລະບຸໃນແຜນພັດທະນາ ຕະຫຼາດຊາຍແດນ.

2. ສອງຝ່າຍຈະພະຍາຍາມສົ່ງເສີມ ແລະ ສ້າງເງື່ອນໄຂສະດວກໃຫ້ແກ່ພໍ່ຄ້າຊາຍແດນ ແລະ ປະຊາຊົນຊາຍແດນ ຂອງສອງປະເທດໃນການເຮັດການຄ້າຊາຍແດນຢູ່ທີ່ຕະຫຼາດຊາຍແດນ ໂດຍໃຫ້ສອດຄ່ອງກັບລະບຽບ ແລະ ກົດ ໝາຍຂອງແຕ່ລະປະເທດ.

ມາດຕາ 9

ການຊຳລະສະສາງ

1. ການຊຳລະສະສາງພາຍໃຕ້ສັນຍາສະບັບນີ້ແມ່ນສາມາດນຳໃຊ້ເງິນກີບລາວ, ຫວຽດນາມດົ່ງ ຫຼື ເງິນຕາ ຕ່າງປະເທດທີ່ສາມາດແລກປ່ຽນໄດ້ງ່າຍ ຕາມການຕົກລົງຂອງສອງຝ່າຍ.

2. ການຊຳລະສະສາງໃນການຄ້າຊາຍແດນສາມາດຊຳລະໂດຍເອົາສິນຄ້າແລກສິນຄ້າ, ເງິນສິດ ແລະ ການຊຳລະ ຜ່ານທະນາຄານ ໂດຍການຕົກລົງເຫັນດີຂອງປະຊາຊົນຊາຍແດນ ແລະ ພໍ່ຄ້າຊາຍແດນ ໂດຍສອດຄ່ອງກັບກົດ ໝາຍ ແລະ ລະບຽບການຂອງແຕ່ລະປະເທດ.

3. ສອງຝ່າຍຕ້ອງພະຍາຍາມຊຸກຍູ້ສົ່ງເສີມທະນາຄານທຸລະກິດ ໃຫ້ຮ່ວມມືໃນການສ້າງຕັ້ງສາຂາ ແລະ ສ້າງຈຸດ ແລກປ່ຽນເງິນຕາ ເພື່ອສະໜອງການບໍລິການດ້ານທະນາຄານ ຢູ່ຕາມເຂດຊາຍແດນ.

ມາດຕາ 10
ການຄຸ້ມຄອງເງິນສົດ

1. ບຸກຄົນ, ຜູ້ທີ່ມີຄວາມຕ້ອງການຖືເງິນຕິດຕົວເປັນເງິນກີບລາວ, ຫວຽດນາມດົ່ງ ແລະ ເງິນຕາຕ່າງປະເທດ ເງິນຈຳນວນທີ່ໄດ້ຮັບອະນຸຍາດ ເມື່ອເດີນທາງຜ່ານດ່ານຊາຍແດນແມ່ນຕ້ອງແຈ້ງ ຫຼື ຂໍອະນຸຍາດຈາກເຈົ້າໜ້າທີ່ກ່ຽວຂ້ອງ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງແຕ່ລະປະເທດ.
2. ລະບຽບການຖືເງິນສົດຕິດຕົວຂອງແຕ່ລະປະເທດ ແມ່ນຕ້ອງເຜີຍແຜ່ຢ່ຕາມຈິດໝາຍເຫດທາງລັດຖະການ ຫຼື ເວບໄຊ້ຂອງລັດຖະບານ ແລະ ຕ້ອງຕິດປະກາດຢ່ຕາມດ່ານຊາຍແດນ.

ມາດຕາ 11
ການຄຸ້ມຄອງຄົນທີ່ເຄື່ອນໄຫວວຽກງານການຄ້າຊາຍແດນ

ບຸກຄົນທີ່ເຄື່ອນໄຫວວຽກງານການຄ້າຊາຍແດນ ຕ້ອງປະຕິບັດຕາມລະບຽບ ແລະ ກົດໝາຍຂອງແຕ່ລະປະເທດ, ແລະ ສັນຍາສອງຝ່າຍ ແລະ ຫຼາຍຝ່າຍທີ່ທັງສອງຝ່າຍເປັນພາຄີ ເວລາທີ່ເດີນທາງຜ່ານດ່ານຊາຍແດນ.

ມາດຕາ 12
ການຄຸ້ມຄອງພາຫະນະຂົນສົ່ງ

ສອງຝ່າຍ ພະຍາຍາມ ເພີ່ມທະວີ ແລະ ສ້າງເງື່ອນໄຂສະດວກ ໃຫ້ແກ່ພາຫະນະຂົນສົ່ງ ເວລາເດີນທາງຜ່ານດ່ານຊາຍແດນ ໂດຍສອດຄ່ອງກັບລະບຽບ ແລະ ກົດໝາຍຂອງແຕ່ລະປະເທດ ແລະ ສັນຍາສອງຝ່າຍ ແລະ ຫຼາຍຝ່າຍ ທີ່ສອງຝ່າຍເປັນພາຄີ.

ມາດຕາ 13
ການກັກກັນພືດ ແລະ ການກວດກາສິນຄ້າ

1. ສິນຄ້າທີ່ບໍ່ມີແຫລ່ງກຳເນີດຈາກບັນດາແຂວງຊາຍແດນຂອງ ສປປ ລາວ ແລະ ບໍ່ຢ່ພາຍໃຕ້ໂຄງການລົງທຶນຂອງນັກລົງທຶນຫວຽດນາມ ແລະ ແລກປ່ຽນຊື້ຂາຍໂດຍພໍ່ຄ້າຊາຍແດນ ຕ້ອງຜ່ານການກວດກາສຸຂະນາໄມ, ສຸຂະນາໄມພືດ ແລະ ສັດ ຕາມລະບຽບ ແລະ ກົດໝາຍຂອງແຕ່ລະປະເທດ.
2. ສິນຄ້າທີ່ຜະລິດຢ່ແຂວງຊາຍແດນຂອງ ສປປ ລາວ ພາຍໃຕ້ການລົງທຶນຂອງນັກລົງທຶນຫວຽດນາມ ບໍ່ຕ້ອງມີການຂໍໃບອະນຸຍາດຕ່າງໆ, ບໍ່ຕ້ອງຜ່ານການກວດກາສຸຂະນາໄມ, ສຸຂະນາໄມພືດ ແລະ ສັດ, ແລະ ບໍ່ຕ້ອງກວດກາຄຸນນະພາບ ແລະ ການກວດກາຄວາມປອດໄພດ້ານອາຫານ ເວລາທີ່ນຳເຂົ້າຫວຽດນາມ, ຍົກເວັ້ນໃນກໍລະນີທີ່ມີການແຈ້ງເຕືອນຂອງເຈົ້າໜ້າທີ່ຝ່າຍໃດຝ່າຍໜຶ່ງຂອງຄູ່ສັນຍາ ກ່ຽວກັບຄວາມສ່ຽງຂອງສິນຄ້າສະເພາະໃດໜຶ່ງ.

ມາດຕາ 14

ການແລກປ່ຽນຂໍ້ມູນຂ່າວສານ ແລະ ຝຶກອົບຮົມ

1. ສອງຝ່າຍຄວນສະໜອງຂໍ້ມູນຂ່າວສານກ່ຽວກັບລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງກັບການຄ້າຊາຍແດນ ຢ່າງພຽງພໍ ລວມມີ ຂໍ້ບັນຍັດກ່ຽວກັບຂັ້ນຕອນທາງດ້ານພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າປັບໃໝຕ່າງໆ ລວມ ທັງຂໍ້ມູນຂ່າວສານກ່ຽວກັບບັນດາພະຍາດຂອງພືດ ແລະ ສັດ ໃຫ້ແກ່ເຈົ້າໜ້າທີ່ກ່ຽວຂ້ອງ, ພໍ່ຄ້າຊາຍແດນ ແລະ ປະຊາຊົນຊາຍແດນ ຂອງສອງປະເທດ.

2. ສອງຝ່າຍຄວນສ້າງໂຄງການຝຶກອົບຮົມຮ່ວມກັນສຳລັບຂະແໜງການຄຸ້ມຄອງທີ່ກ່ຽວຂ້ອງ, ພໍ່ຄ້າ ແລະ ປະຊາຊົນຊາຍແດນ.

ມາດຕາ 15

ການສົ່ງເສີມການຄ້າ, ການລົງທຶນ ແລະ ການທ່ອງທ່ຽວຕາມຊາຍແດນ

1. ສອງຝ່າຍຄວນສ້າງເງື່ອນໄຂສະດວກໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງຂອງທັງສອງຝ່າຍ ໃນການດຳເນີນກິດ ຈະກຳການສົ່ງເສີມການຄ້າດ້ານສິນຄ້າຢູ່ຕາມຊາຍແດນ ລວມມີ ການຄົ້ນຄວ້າ, ການວິໄຈຕະຫຼາດ, ການວາງສະ ແດງສິນຄ້າ, ການສ້າງສູນການຄ້າ, ການໂຄສະນາ, ການເປັນທີ່ປຶກສາ, ການເປັນນາຍໜ້າ ຕົວແທນ ແລະ ການໃຫ້ ບໍລິການ ເພື່ອປັບປຸງການເຂົ້າເຖິງຕະຫຼາດຊາຍແດນຂອງແຕ່ລະປະເທດໃຫ້ດີຂຶ້ນ.

2. ສອງຝ່າຍຈະຊຸກຍູ້ນັກລົງທຶນລາວ ແລະ ນັກລົງທຶນຫວຽດນາມ ລວມທັງ ນັກລົງທຶນຕ່າງປະເທດ ໃຫ້ມາ ລົງທຶນໃນການພັດທະນາພື້ນຖານໂຄງລ່າງການຄ້າຊາຍແດນ.

3. ສອງຝ່າຍຄວນສົ່ງເສີມການພັດທະນາການທ່ອງທ່ຽວໂດຍເຊື່ອມໂຍງກັບການຄ້າຊາຍແດນ; ສົ່ງເສີມກິດຈະກຳ ການ ທ່ອງທ່ຽວໄປຄຽງຄູ່ກັບການຈັດງານສະແດງສິນຄ້າ ແລະ ການຊື້ສິນຄ້າຂ້າມແດນ; ຂະຫຍາຍຈຸດທ່ອງທ່ຽວ ປາຍທາງດ້ານວັດທະນາທຳ ແລະ ເສັ້ນທາງທ່ອງທ່ຽວທີ່ເຊື່ອມກັບບັນດາແຂວງຂອງ ສປປ ລາວ ແລະ ຫວຽດນາມ; ແລະ ຊຸກຍູ້ໃນການສ້າງ ແລະ ການພັດທະນາເສັ້ນທາງທ່ອງທ່ຽວເຂົ້າໄປໃນດິນແດນຂອງ ສປປ ລາວ ແລະ ຫວຽດນາມ, ແລະ ເຊື່ອມຈອດກັບບັນດາປະເທດໃນພາກພື້ນ.

ມາດຕາ 16

ການພັດທະນາການຄ້າທີ່ສະໜັບສະໜຸນການບໍລິການ ແລະ ອຳນວຍຄວາມສະດວກດ້ານການຄ້າຢູ່ຊາຍແດນ

1. ສອງຝ່າຍພະຍາມຊຸກຍູ້ສົ່ງເສີມເພື່ອພັດທະນາການຄ້າທີ່ສະໜັບສະໜຸນການບໍລິການການຢູ່ເຂດຊາຍແດນ.

2. ເຈົ້າໜ້າທີ່ຂອງສອງຝ່ຍ ຈະບໍ່ອະນຸຍາດໃຫ້ເກັບຄ່າທຳນຽມໃນການບໍລິການຕ່າງໆສຳລັບການຄ້າຊາຍແດນທີ່ສະ ໜັບສະໜຸນການບໍລິການ ທີ່ບໍ່ສອດຄ່ອງກັບລະບຽບ ແລະ ກົດໝາຍຂອງແຕ່ລະປະເທດ.

3. ສອງຝ່າຍຄວນອຳນວຍຄວາມສະດວກໃຫ້ແກ່ການເຄື່ອນຍ້າຍສິນຄ້າ, ຄົນ ແລະ ພາຫະນະຂົນສົ່ງຂ້າມຊາຍ ແດນຂອງສອງປະເທດ ໂດຍສອດຄ່ອງກັບລະບຽບ ແລະ ກົດໝາຍຂອງແຕ່ລະປະເທດ.

ມາດຕາ 17
ຄະນະກຳມະການຊີ້ນຳວຽກງານການຄ້າຊາຍແດນ

ສອງຝ່າຍເຫັນດີໃຫ້ສ້າງຕັ້ງຄະນະກຳມະການຊີ້ນຳວຽກງານການຄ້າຊາຍແດນ ເພື່ອແນະນຳ ແລະ ຊີ້ນຳ ການຈັດ ຕັ້ງປະຕິບັດສັນຍາສະບັບນີ້.

ມາດຕາ 18
ສະມາຄົມນັກທຸລະກິດການຄ້າຊາຍແດນ ລາວ-ຫວຽດນາມ

ສອງຝ່າຍສົ່ງເສີມການສ້າງຕັ້ງສະມາຄົມນັກທຸລະກິດການຄ້າຊາຍແດນລາວ-ຫວຽດນາມ ເພື່ອແນໃສ່ການ ອຳນວຍຄວາມສະດວກໃຫ້ແກ່ວຽກງານການຄ້າຊາຍແດນ ຢູ່ບັນດາແຂວງຊາຍແດນຂອງສອງປະເທດ.

ມາດຕາ 19
ກອງປະຊຸມວຽກງານການຄ້າຊາຍແດນລາວ-ຫວຽດນາມ

ເພື່ອເປັນການຕີລາຄາຜົນສຳເລັດ, ຄວາມຫຍຸ້ງຍາກ ແລະ ບັນດາມາດຕະການທີ່ຈຳເປັນ, ສອງຝ່າຍ ພະຍາຍາມ ຈັດກອງປະຊຸມ ກ່ຽວກັບການຮ່ວມມືການພັດທະນາການຄ້າຊາຍແດນລະຫວ່າງ ສປປ ລາວ ກັບ ຫວຽດນາມ ທຸກໆສອງປີ ໂດຍຜັດປ່ຽນກັນເປັນເຈົ້າພາບ.

ມາດຕາ 20
ການແກ້ໄຂຂໍ້ຂັດແຍ່ງ

ທຸກຄວາມເຂົ້າໃຈທີ່ແຕກຕ່າງໃນການອະທິບາຍ ຫຼື ປະຕິບັດບັນດາຂໍ້ກຳນົດໃນສັນຍາສະບັບນີ້ ແມ່ນຈະ ແກ້ໄຂໂດຍການປຶກສາຫາລື ຂອງຄູ່ສັນຍາ ບົນຈິດໃຈແຫ່ງຄວາມສາມັກຄີ ແລະ ມິດຕະພາບ.

ມາດຕາ 21
ເອກະສານຊ້ອນທ້າຍ

ເອກະສານຊ້ອນທ້າຍ ທີ່ຄັດຕິດກັບສັນຍາສະບັບນີ້ ແມ່ນເປັນສ່ວນໜຶ່ງຂອງສັນຍາສະບັບນີ້.

ມາດຕາ 22
ການດັດແກ້ ແລະ ການປັບປຸງສັນຍາ

ສັນຍາສະບັບນີ້ອາດຈະຖືກດັດແກ້ ແລະ ປັບປຸງເພີ່ມເຕີມ ໂດຍການເຫັນດີເປັນເອກະພາບເປັນລາຍລັກ ອັກສອນຂອງສອງຝ່າຍ, ແລະ ການດັດແກ້ ແລະ ການປັບປຸງນັ້ນ ຕ້ອງມີຜົນບັງຄັບໃຊ້ຕາມວັນ, ເວລາທີ່ສອງຝ່າຍ

ອາດເຫັນດີກັນ. ການດັດແກ້ ແລະ ການປັບປຸງສັນຍາທີ່ສອງຝ່າຍໄດ້ຕົກລົງກັນ ຕ້ອງຖືວ່າເປັນສ່ວນໜຶ່ງຂອງ ສັນຍາສະບັບນີ້ ແລະ ມີຜົນບັງຄັບໃຊ້ຕາມວັນເວລາທີ່ສອງຝ່າຍໄດ້ຕົກລົງກັນ.

ມາດຕາ 23
ການມີຜົນບັງຄັບໃຊ້, ການຕໍ່ ແລະ ການສິ້ນສຸດຂອງສັນຍາ

1. ສັນຍາສະບັບນີ້ ຕ້ອງມີຜົນບັງຄັບໃຊ້ພາຍໃນໄລຍະເວລາ 30 ວັນ, ພາຍຫຼັງໄດ້ຮັບໜັງສືແຈ້ງເປັນລາຍລັກອັກສອນ ຜ່ານຊ່ອງທາງການທູດ ກ່ຽວກັບການສຳເລັດຂັ້ນຕອນຂໍອະນຸມັດພາຍໃນ ສຳລັບການມີຜົນບັງຄັບໃຊ້ ຂອງສັນຍາສະບັບນີ້.
2. ສັນຍາສະບັບນີ້ມີຜົນບັງຄັບໃຊ້ ໃນໄລຍະເວລາ 03 ປີ ນັບຕັ້ງແຕ່ມື້ມີຜົນບັງຄັບໃຊ້ ແລະ ຈະຕໍ່ອາຍຸໂດຍ ອັດຕະໂນມັດອອກໄປທຸກໆ 03 ປີ ຍົກເວັ້ນກໍລະນີຝ່າຍໃດຝ່າຍໜຶ່ງແຈ້ງເປັນລາຍລັກອັກສອນ ທີ່ສະແດງເຈດ ຈຳນົງຢາກຢຸດຕິສັນຍາພາຍໃນ 03 ເດືອນ ກ່ອນວັນທີ່ຂອງສັນຍາຈະໝົດອາຍຸການນຳໃຊ້.
3. ເມື່ອສັນຍາສະບັບນີ້ໝົດອາຍຸການນຳໃຊ້, ບົດບັນຍັດຂອງສັນຍາສະບັບນີ້ ຍັງສືບຕໍ່ມີຜົນບັງຄັບໃຊ້ກັບສັນຍາທີ່ ໄດ້ເຊັນກັນ ແຕ່ຍັງບໍ່ສາມາດຈັດຕັ້ງປະຕິບັດໃຫ້ສຳເລັດຢ່າງສົມບູນໂດຍຄູ່ສັນຍາ.
4. ສັນຍາສະບັບນີ້ ບໍ່ຕ້ອງມີຜົນກະທົບຕໍ່ສິດ ແລະ ພັນທະຂອງສອງຝ່າຍ ທີ່ລະບຸໄວ້ໃນສັນຍາກ່ຽວຂ້ອງອື່ນໆທີ່ ສອງຝ່າຍເປັນພາຄີ.

ເຮັດທີ່ ແຂວງ ເຫງະອານ, ໃນວັນທີ 27 ມິຖຸນາ 2015, ເປັນ 2 ສະບັບຕົ້ນ, ພາສາລາວ, ຫວຽດ ແລະ ອັງກິດ ແລະ ມີຄຸນຄ່າເທົ່າກັນ. ໃນກໍລະນີທີ່ມີການຕີຄວາມໝາຍຂອງສັນຍາແຕກຕ່າງກັນ ຕ້ອງຖືສະບັບພາສາອັງກິດເປັນ ຫຼັກ.

ຕາງໜ້າ ລັດຖະບານ ແຫ່ງ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ເຂັມມະນີ ພົນເສນາ
ລັດຖະມົນຕີວ່າການ
ກະຊວງອຸດສາຫະກຳ ແລະ ການຄ້າ

ຕາງໜ້າ ລັດຖະບານ ແຫ່ງ
ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ

ຫວ ຊຸຍ ຮ່ວ
ລັດຖະມົນຕີວ່າການ
ກະຊວງອຸດສາຫະກຳ ແລະ ການຄ້າ

ເອກະສານຊ້ອນທ້າຍ 01

ສິນຄ້າທີ່ມີແຫລ່ງກຳເນີດຈາກ ສປປ ລາວ ທີ່ໄດ້ຮັບສິດທິພິເສດດ້ານພາສີຂາເຂົ້າ 0% ເມື່ອນຳເຂົ້າໄປ ສສ ຫວຽດນາມ

ລຳດັບ	HS Code AHTN 2012	ເນື້ອໃນລະອຽດ
1	01.01	ມ້າ, ລາ ແລະ ລໍ ທີ່ມີຊີວິດ.
2	01.02	ສັດປະເພດງົວຄວາຍທີ່ມີຊີວິດ.
3	01.03	ໝູທີ່ມີຊີວິດ.
4	01.04	ແກະ ແລະ ແບ ທີ່ມີຊີວິດ.
5	01.05	ສັດປີກລ້ຽງມີຊີວິດໄດ້ແກ່ໄກ່ຊະນິດ*ແກລລັສ ໂດເມສຕິກັສ,* ເປັດ, ຫ່ານ, ໄກ່ງວງ ແລະ ໄກ່ຕ໋ອກ.
6	01.06	ສັດທີ່ມີຊີວິດອື່ນໆ.
7	02.01	ຊິ້ນສັດຈຳພວກງົວຄວາຍ, ສົດ ຫຼື ແຊ່ເຢັນ.
8	02.02	ຊິ້ນສັດຈຳພວກງົວຄວາຍ, ແຊ່ແຂງ.
9	02.03	ຊິ້ນໝູ, ສົດ, ແຊ່ເຢັນ ຫຼື ແຊ່ແຂງ.
10	02.04	ຊິ້ນແກະ ຫຼືແບ, ສົດ, ແຊ່ເຢັນ ຫຼື ແຊ່ແຂງ.
11	02.05	ຊິ້ນມ້າ, ຊິ້ນລາ, ຊິ້ນລໍ, ສົດ, ແຊ່ເຢັນ ຫຼື ແຊ່ແຂງ.
12	02.06	ສ່ວນອື່ນໆ ທີ່ບໍລິໂພກໄດ້ຂອງສັດຈຳພວກງົວຄວາຍ, ໝູ, ແກະ, ແບ, ມ້າ, ລາ, ລໍ, ສົດ, ແຊ່ເຢັນ ຫຼື ແຊ່ແຂງ.
13	02.07	ຊິ້ນ ແລະ ສ່ວນອື່ນທີ່ບໍລິໂພກໄດ້ຂອງສັດປີກລ້ຽງລະບຸໄວ້ໃນລະຫັດເຄ້ົາ 01.05, ສົດ; ແຊ່ເຢັນ ຫຼື ແຊ່ແຂງ.
14	02.08	ຊິ້ນ ແລະ ສ່ວນອື່ນໆ ຂອງສັດທີ່ສາມາດບໍລິໂພກໄດ້, ສົດ, ແຊ່ເຢັນ ຫຼື ແຊ່ແຂງ.
15	02.09	ຕ່ອນນ້ຳມັນໝູ, ທີ່ບໍ່ມີຊິ້ນຕິດ ແລະ ຕ່ອນນ້ຳມັນສັດປີກລ້ຽງ, ບໍ່ທັນໄດ້ປ່ຽນສະພາບ ຫຼື ຍັງບໍ່ທັນໄດ້ຈືນ, ສົດ, ແຊ່ເຢັນ, ແຊ່ແຂງ, ເອືອບເກືອ, ແຊ່ນ້ຳເກືອ, ແຫ້ງ ຫຼື ອົບຄວັນ.
16	02.10	ຊິ້ນ ແລະ ສ່ວນອື່ນຂອງສັດທີ່ບໍລິໂພກໄດ້, ເອືອບເກືອ, ແຊ່ນ້ຳເກືອ, ແຫ້ງ ຫຼື ອົບຄວັນ; ຊິ້ນ ແລະ ສ່ວນອື່ນຂອງສັດທີ່ປົດເປັນແປ້ງ ຊຶ່ງສາມາດບໍລິໂພກໄດ້.
17	03.01	ປາມີຊີວິດ.
18	03.02	ປາ, ສົດ ຫຼື ແຊ່ເຢັນ, ບໍ່ລວມເອົາຊິ້ນສັນປາທີ່ເຮັດເປັນແຜ່ນແບບຟິລເລທ໌ ແລະ ຊິ້ນປາແບບອື່ນໆ ຕາມລະຫັດເຄ້ົາ 03.04.
19	03.03	ປາ, ແຊ່ແຂງ, ບໍ່ລວມເອົາຊິ້ນປາແບບຟິລເລທ໌ ແລະ ຊິ້ນປາແບບອື່ນໆ ຕາມລະຫັດເຄ້ົາ 03.04.
20	03.04	ຊິ້ນປາທີ່ເຮັດເປັນແຜ່ນແບບຟິລເລທ໌ ແລະ ຊິ້ນປາແບບອື່ນໆ (ຈະປົດເປັນແປ້ງ ຫຼື ບໍ່ກໍ່ຕາມ), ສົດ, ແຊ່ເຢັນ ຫຼື ແຊ່ແຂງ.
21	03.05	ປາ, ແຫ້ງ, ເອືອບເກືອ ຫຼື ແຊ່ນ້ຳເກືອ, ປາອົບຄວັນ, ຈະເຮັດໃຫ້ສຸກກ່ອນອົບຄວັນ ຫຼື ໃນຂະນະອົບຄວັນ ຫຼື ບໍ່ກໍ່ຕາມ, ລວມທັງປາປົດທີ່ເໝາະສຳລັບບໍລິໂພກ.
22	03.06	ສັດນ້ຳຈຳພວກຄຣັສຕາຊຽນ, ຈະເອົາເປືອກອອກ ຫຼື ບໍ່ກໍ່ຕາມ, ມີຊີ ວິດ, ສົດ, ແຊ່ເຢັນ, ແຊ່ແຂງ, ແຫ້ງ, ເອືອບ ເກືອ ຫຼື ແຊ່ນ້ຳເກືອ; ສັດນ້ຳຈຳພວກຄຣັສຕາຊຽນ ອົບຄວັນ, ຈະເອົາເປືອກອອກ ຫຼື ບໍ່ກໍ່ຕາມ, ຈະເຮັດໃຫ້ສຸກ ຫຼື ບໍ່ກໍ່ຕາມ ຫຼື ໃນ ຂະນະອົບ ຄວັນ; ສັດນ້ຳຈຳພວກຄຣັສຕາຊຽນທີ່ຍັງບໍ່ທັນເອົາເປືອກອອກ, ເຮັດ ໃຫ້ສຸກດ້ວຍ ການໜຶ້ງ ຫຼື ຕົ້ມ, ຈະແຊ່ເຢັນ, ແຊ່ແຂງ, ແຫ້ງ, ເອືອບເກືອ ຫຼື ແຊ່ນ້ຳເກືອ ຫຼື ບໍ່ກໍ່ຕາມ; ເຮັດເປັນແປ້ງ, ແປ້ງ ຫຍາບ ແລະ ເຮັດເປັນແຜ່ນບາງທີ່ເໝາະສຳລັບບໍລິໂພກ.
23	03.07	ສັດນ້ຳຈຳພວກໂມລລັສ, ຈະເອົາເປືອກອອກ ຫຼື ບໍ່ກໍ່ຕາມ, ມີຊີວິດ, ສົດ, ແຊ່ເຢັນ, ແຊ່ແຂງ, ແຫ້ງ, ເອືອບເກືອ ຫຼື ແຊ່ນ້ຳເກືອ; ສັດນ້ຳຈຳພວກ ໂມລລັສທີ່ອົບຄວັນ, ບໍ່ທັນເອົາ ເປືອກ ຫຼື ບໍ່ກໍ່ຕາມ, ຈະເຮັດໃຫ້ສຸກ ຫຼື ບໍ່ ກ່ອນ ຫຼື ໃນຂະນະອົບຄວັນ; ປົດເປັນແປ້ງ ເໝາະສຳລັບການບໍລິໂພກຂອງຄົນ.

24	03.08	ສັດນ້ຳຈຳພວກບໍ່ມີກະດູກສັນຫຼັງ ນອກຈາກສັດນ້ຳຈຳພວກຄຣັສຕາຊຽນ (ກຸ້ງ, ປູ ແລະ ຫອຍ) ແລະ ໂມລລັສ, ມີຊີວິດ, ສິດ, ແຊ່ເຢັນ, ແຊ່ແຂງ, ແຫ້ງ, ເອີອບເກືອ, ຫຼື ແຊ່ນ້ຳ ເກືອ; ສັດນ້ຳຈຳພວກບໍ່ມີກະດູກສັນຫຼັງ ທີ່ອີບຄ້ອນ ນອກຈາກສັດນ້ຳຈຳພວກຄຣັສຕາ ຊຽນ ແລະ ໂມລລັສ, ຈະເຮັດໃຫ້ສຸກ ຫຼື ບໍ່ກໍ່ຕາມ ຫຼື - ຢູ່ໃນຂະບວນ ການອີບຄ້ອນ; ແປ້ງ, ແປ້ງຫຍາບ ແລະ ເຮັດເປັນແຜ່ນບາງຂອງສັດນ້ຳຈຳພວກບໍ່ມີກະດູກສັນຫຼັງ ນອກຈາກ ສັດນ້ຳຈຳພວກຄຣັສຕາຊຽນ ແລະ ໂມລລັສ, ເໝາະສຳ ລັບການບໍລິໂພກຂອງຄົນ.
25	04.01	ນົມ ແລະ ຄຣີມ, ທີ່ບໍ່ໄດ້ຂຸ້ນໃຫ້ຂຸ້ນ ແລະ ບໍ່ໄດ້ຕື່ມນ້ຳຕານ ຫຼື ສານຫວານອື່ນໆ.
26	04.02	ນົມ ແລະ ຄຣີມ, ທີ່ຂຸ້ນໃຫ້ຂຸ້ນ ຫຼື ໄດ້ຕື່ມນ້ຳຕານ ຫຼື ສານຫວານອື່ນໆ.
27	04.03	ເນີຍທີ່ເຮັດຈາກນົມ, ນົມ ແລະ ຄຣີມທີ່ຂຸ້ນຈືນແຂງ, ນົມສົ້ມ, ເຄເຟີ ລວມທັງນົມ ແລະ ຄຣີມທີ່ໝັກ ຫຼື ເຮັດໃຫ້ສົມຢ່າງອື່ນ, ຈະຂຸ້ນໃຫ້ຂຸ້ນ ຫຼື ຕື່ມນ້ຳຕານ ຫຼື ສານຫວານອື່ນໆ ຫຼື ປຸງແຕ່ງກິ່ນ ຫຼື ຕື່ມໝາກໄມ້, ຖົ່ວ ຫຼື ໂກໂກ ຫຼື ບໍ່ກໍ່ຕາມ.
28	04.04	ທາງນົມ, ຈະເຮັດວໃຫ້ຂຸ້ນ ຫຼື ຕື່ມນ້ຳຕານ ຫຼື ສານຫວານອື່ນໆ ຫຼື ບໍ່ກໍ່ຕາມ; ຜະລິດຕະພັນທີ່ມີອົງປະກອບຂອງ ນົມທຳມະຊາດ, ຈະຕື່ມນ້ຳຕານ ຫຼື ສານຫວານອື່ນໆ ຫຼື ບໍ່ກໍ່ຕາມ, ບໍ່ໄດ້ລະບຸ ຫຼື ລວມໄວ້ໃນບ່ອນອື່ນ.
29	04.05	ເນີຍ ແລະ ໄຂມັນ ແລະ ນ້ຳມັນອື່ນໆ ທີ່ໄດ້ຈາກນົມ; ນົມທີ່ໄດ້ຈາກການຮີດ.
30	04.06	ເນີຍແຂງ ແລະ ເນີຍກ້ອນ.
31	04.07	ໄຂ່ສັດປີກ, ທັງເປືອກ, ສິດ, ,ດອງຮັກສາເພື່ອບໍ່ໃຫ້ເໜົ່າ.ຫຼື ເຮັດໃຫ້ສຸກ.-
32	04.08	ໄຂ່ສັດປີກ, ເອົາເປືອກອອກແລ້ວ ແລະ ໄຂ່ແດງ, ສິດ, ແຫ້ງ, ເຮັດໃຫ້ສຸກໂດຍການໜຶ້ງ ຫຼື ຕົ້ມ, ຫຸ້ ຫຼື ອັດເປັນ ຮູບ, ແຊ່ແຂງ ຫຼື ໃສ່ສານກັນບູດ ເພື່ອບໍ່ໃຫ້ເໜົ່າໂດຍວິທີອື່ນ, ຈະຕື່ມນ້ຳຕານ ຫຼື ສານຫວານ ຫຼື ບໍ່ກໍ່ຕາມ.
33	04.09	ນ້ຳເຜິ້ງທຳມະຊາດ.
34	04.10	ຜະລິດຕະພັນຈາກສັດທີ່ບໍລິໂພກໄດ້ ຊຶ່ງບໍ່ໄດ້ລວມ ຫຼື ລະບຸໄວ້ໃນບ່ອນອື່ນໆ.
35	05.01	ຜົມຄົນ, ທີ່ຍັງບໍ່ທັນໄດ້ມີການຕົກແຕ່ງ, ຈະລ້ຳໆ ຫຼື ຂັດເງົາແລ້ວ ຫຼື ບໍ່ກໍ່ຕາມ; ເສດຜົມຄົນ.
36	05.02	ຂົນໝູປ່າ, ຂົນໝູບ້ານ ແລະ ຂົນສັດອື່ນໆ ສຳລັບໃຊ້ເຮັດແປງ; ລວມທັງເສດຂອງຂົນດັ່ງ ກ່າວ.
37	05.04	ໄສ້, ພົກປັດສະວະແບລດເດີຣ໌ ແລະ ກະເພາະອາຫານຂອງສັດ (ນອກຈາກຂອງປາ), ທັງໝົດ ຫຼື ແບ່ງອອກເປັນ ສ່ວນ, ສິດ, ແຊ່ເຢັນ, ແຊ່ແຂງ, ເອີອບເກືອ, ແຊ່ນ້ຳເກືອ, ແຫ້ງ ຫຼື ອົບຄວັນ.
38	05.05	ໜັງ ແລະ ສ່ວນອື່ນໆ ຂອງສັດປີກທີ່ມີຂົນແຂງ ຫຼື ຂົນອ່ອນຕິດຂົນແຂງ ແລະ ສ່ວນຂອງ ຂົນແຂງ (ຈະຕົບ ແຕ່ງປາຍ ຫຼື ບໍ່ກໍ່ຕາມ) ແລະ ຂົນອ່ອນທີ່ບໍ່ໄດ້ຕົບແຕ່ງຫຼາຍໄປກວ່າການທຳຄວາມສະອາດ, ຂ້າເຊື້ອໂລກ ຫຼື ເຮັດໄວ້ບໍ່ໃຫ້ເໜົ່າ; ຜົງ ແລະ ເສດຂອງຂົນແຂງ ຫຼື ສ່ວນຂອງຂົນແຂງ.
39	05.06	ກະດູກ ແລະ ແກນເຂົາສັດ, ທີ່ຍັງບໍ່ທັນມີການຕົບແຕ່ງ, ເອົາໄຂມັນອອກ, ຕົບແຕ່ງແບບງ່າຍດາຍ (ແຕ່ບໍ່ໄດ້ຕັດ ເປັນຮູບຊົງ), ຜ່ານກຳມະວິທີໂດຍການໃຊ້ອາຊິດ ຫຼື ເອົາເຈລາຕິນອອກ; ຜົງ ແລະ ເສດຂອງຜະລິດຕະພັນເຫຼົ່ານີ້.
40	05.07	ງາ, ອອງເຕົ່າ, ກະດູກປາວານ, ຂົນຂໍ້ຕີນມ້າ, ໜວດຄາງຂອງປາວານ, ເຂົາ, ເຂົາ ກວາງ, ກີບຕີນສັດ, ເລັບຕີນສັດ, ເລັບແໜມສັດ ແລະ ສິບນິ້ວທີ່ຍັງບໍ່ທັນຕົບແຕ່ງ ຫຼື ພຽງ ແຕ່ຕົບແຕ່ງໃນເບື້ອງຕົ້ນ, ແຕ່ບໍ່ໄດ້ຕັດ ເປັນຮູບຊົງ; ຜົງ ແລະ ເສດຂອງຜະລິດຕະພັນເຫຼົ່ານີ້.
41	05.08	ຫີນປະການັງ ແລະ ສິ່ງຄ້າຍຄຽງກັນທີ່ຍັງບໍ່ທັນຕົບແຕ່ງ ຫຼື ພຽງຕົບແຕ່ງໃນເບື້ອງຕົ້ນ, ບໍ່ທັນຕົບແຕ່ງຢ່າງອື່ນ; ເປືອກຂອງສັດນ້ຳຈຳພວກໂມລຸສ, ຄຣັສຕາຊຽນ (ຫອຍ, ກຸ້ງ, ກະ ປູ) ຫຼື ເອກິໂນເດີມ ແລະ ກະດູກປາມຶກ, ທີ່ຍັງບໍ່ທັນໄດ້ຕົບແຕ່ງ ຫຼື ພຽງແຕ່ຈັດແຕ່ງໃນເບື້ອງຕົ້ນ ແຕ່ບໍ່ໄດ້ຕັດເປັນຮູບ ຊົງ; ຜົງ ແລະ ເສດ ຂອງຜະລິດຕະະພັນດັ່ງກ່າວ.

42	05.10	ອ້ໍພັນສິເທົ້ໍາຂອງແຫຼວຈ້ໍາກສັດ, ປ້ໍາ, ກ້ັສໂຕຣ້ໍມ, ຊິແວດ ແລ້ະ ສັດປ້ະເພດກ້ິນມ້ິດ, ແມ້ງວ້ັນສ້ະເປ້ນ, ປ້ິສ້ັດ, ຈ້ະແຫ້ງແລ້ວ ຫ້ຼື ບ້ໍ່ກ້ຳຕ້ໍາມ; ຕ້ໍ່ອມ ແລ້ະ ສ້ານອ້ື່ນໆ ຂ້ອງສ້ັດທ້ີ່ໃຊ້ສ້ໍາລ້ັບປຸ້ງແຕ່ງຜ້ະລ້ິດຕ້ະພ້ັນກ້ານຢ້ໍາ, ແຊ່ເຢ້ັນ, ແຊ່ແຂ້ງ ຫ້ຼື ຮ້ັກສ້ໍາໄວ້ຊ້ົ່ວຄ້ໍາວ ໂດ້ຍ ວ້ິທ້ີອ້ື່ນ. ໃຊ້ສ້ໍາລ້ັບປຸ້ງແຕ່ງ ຜ້ະລ້ິດຕ້ະພ້ັນກ້ານຢ້ໍາ, ແຊ່ເຢ້ັນ, ແຊ່ແຂ້ງ ຫ້ຼື ຮ້ັກສ້ໍາໄວ້ຊ້ົ່ວຄ້ໍາວໂດ້ຍວ້ິທ້ີອ້ື່ນ.
43	05.11	ຜ້ະລ້ິດຕ້ະພ້ັນທ້ີ່ໄດ້ຈ້ໍາກສັດ ທ້ີ່ບ້ໍ່ໄດ້ບ້ິ່ງ ແລ້ະ ລ້ວມເອ້ົ້ໍາໄວ້ໃນບ່ອ້ນອ້ື່ນ; ສ້ັດຕ້ໍາຍຂ້ອງໝ້ວດທ້ີ 1 ຫ້ຼື 3, ທ້ີ່ບ້ໍ່ ເໝ້ໍາະແກ່ກ້ານບ້ໍລ້ິໂພກຂ້ອງມ້ະນຸ້ດ.
44	06.01	ຫ້ິວ, ຫ້ນ່ໍ, ເຫ້ົ້ໍາ, ຮ້ໍາກ, ຕຸ້່ມຕ້ໍາ ແລ້ະ ແໜ້ໍ, ທ້ີ່ຍ້ັງບ້ໍ່ທ້ັນງ້ອກ, ທ້ີ່ງ້ອກ ຫ້ຼື ອ້ອກ ດ້ອກ; ຕ້ົ້ນ ແລ້ະ ຮ້ໍາກຊ້ີ້ກ້ໍາເຣ ນ້ອກຈ້ໍາກຮ້ໍາກທ້ີ່ບ້ິ່ງໄວ້ໃນລ້ະຫ້ັດເຄ້ົ້ໍາ 12.12.
45	06.02	ຕ້ົ້ນໄມ້ທ້ີ່ມ້ີຊ້ີວ້ິດອ້ື່ນ (ລ້ວມທ້ັ້ງຮ້ໍາກ), ງ່ໍ້າຕ້ອນ ແລ້ະ ແໜ້ໍງຕ້ອນ, ເຊ້ື້ອເຫ້ັດ.
46	06.03	ດ້ອກໄມ້ ແລ້ະ ດ້ອກໄມ້ຈຸ້ມຊ້ະນ້ິດທ້ີ່ເໝ້ໍາະສ້ໍາລ້ັບໄວ້ຕ້ິບແຕ່ງເປ້ັນຊ້ໍ່ດ້ອກໄມ້ ຫ້ຼື ເພ້ືອກ້ານປ້ະດ້ັບ, ສ້ິດ, ແຫ້ັ້ງ, ຍ້ັອມສ້ີ, ເຄ້ືອບ, ອ້າບຊ້ຶມ ຫ້ຼື ຕ້ິບແຕ່ງດ້ວ້ຍວ້ິທ້ີອ້ື່ນ.
47	06.04	ໃບໄມ້, ງ່ໍ້າໄມ້ ແລ້ະ ສ່ວ້ນອ້ື່ນຂ້ອງຕ້ົ້ນໄມ້, ທ້ີ່ບ້ໍ່ມ້ີດ້ອກ ຫ້ຼື ມ້ີດ້ອກ, ຈຸ້ມຕ້ິດ ແລ້ະ ຫ້ຍ້ ້ໍາ, ມ້ອສ ແລ້ະ ໄລເຄ້ນ, ທ້ີ່ເໝ້ໍາະສ້ໍາລ້ັບຕ້ິບແຕ່ງເປ້ັນຊ້ໍ່ດ້ອກໄມ້ ຫ້ຼື ເພ້ືອກ້ານປ້ະດ້ັບ, ສ້ິດ, ແຫ້ັ້ງ, ຍ້ັອມສ້ີ, ເຄ້ືອບ, ອ້າບຊ້ຶມ ຫ້ຼື ຕ້ິບແຕ່ງ ຢ້ໍ່າງດ້ວ້ຍວ້ິທ້ີອ້ື່ນ.
48	07.01	ມ້ັນຝ້ລ້ັ່ງ, ສ້ິດ ຫ້ຼື ແຊ່ເຢ້ັນ.
49	07.02	ໝ້ໍາກເລ້ັ່ນ, ສ້ິດ ຫ້ຼື ແຊ່ເຢ້ັນ.
50	07.03	ຫ້ິວສ້ັ້ກບ້ິ່ວໃຫ້ຍ່, ຫ້ິວສ້ັ້ກບ້ິ່ວນ້ ້ອ້ຍ, ຫ້ິວສ້ັ້ກທ້ຽ້ມ, ສ້ັ້ກຫ້ອ້ມນ້ິ່ວ ແລ້ະ ສ້ັ້ກຈ້ໍ່າພ້ວ້ກສ້ັ້ກ ທ້ຽ້ມອ້ື່ນໆ, ສ້ິດ ຫ້ຼື ແຊ່ເຢ້ັນ.
51	07.04	ກ້ະລ້ໍ່າປ້ີ, ກ້ະລ້ໍ່າປ້ີດ້ອກ, ກ້ະລ້ໍ່າກ້ຼ້ວ, ສ້ັ້ກຈ້ໍ່າພ້ວ້ກສ້ັ້ກກ້ໍ່າດ້ຂ້ໍ່າວ ແລ້ະ ພ້ືດສ້ັ້ກທ້ີ່ຄ້ໍ້າຍຄ້ືກ້ັນໃນຕ້ະກ້ຼ້ນບ້ຣ້ໍ່າສ້ິກ້ໍ່າ, ສ້ິດ ຫ້ຼື ແຊ່ເຢ້ັນ ທ້ີ່ສ້ໍ່າມ້ໍ່າດບ້ໍ້ລ້ິໂພກໄດ້.
52	07.05	ສ້ັ້ກກ້ໍ່າດຫ້ອ້ມ (*ແລ້ກຕູ້ກ້ໍ່າ ຊ້ໍ່າວ້ິຕ້ໍ່າ)* ແລ້ະ ຊ້ິໂຄ້ຣ້ິ (*ຊ້ະນ້ິດຊ້ິ*ໂ*ຄ*ຣ*ຽ*ມ*)*, ສ້ິດ ຫ້ຼື ແຊ່ເຢ້ັນ.
53	07.06	ຫ້ິວກ້ໍ່າຣ້ິດ, ເທ້ິ້ຣ້ ້ໍ່ນ້ິບ, ຫ້ິວປ້ິບທ້ີ່ໃຊ້ເຮ້ັດສ້ະລ້ັດ, ສ້ານຊ້ິໄຟ, ເຊ້ເລ້ຣ້ິເອ້ກ, ຫ້ິວສ້ັ້ກກ້ໍ່າດຂ້ໍ່າວ ແລ້ະ ຫ້ິວຂ້ອ້ງພ້ືດ ທ້ີ່ຄ້ໍ້າຍຄ້ຽ້ງກ້ັ້ນ, ສ້ິດ ຫ້ຼື ແຊ່ເຢ້ັນ.
54	07.07	ໝ້ໍາກແຕ້ງສຸ້ກ ແລ້ະ ໝ້ໍາກແຕ້ງກ້ໍ່າ, ສ້ິດ ຫ້ຼື ແຊ່ເຢ້ັນ.
55	07.08	ພ້ືດສ້ັ້ກຕ້ະກ້ຼ້ນຖ້ົ່ວ, ເອ້ົ້ໍາເປ້ືອກອ້ອກ ຫ້ຼື ບ້ໍ່ກ້ຳຕ້ໍາມ, ສ້ິດ ຫ້ຼືແຊ່ເຢ້ັນ.
56	07.09	ພ້ືດສ້ັ້ກອ້ື່ນໆ, ສ້ິດ ຫ້ຼື ແຊ່ເຢ້ັນ.
57	07.10	ຈ້ໍ່າພ້ວ້ກພ້ືດສ້ັ້ກ (ບ້ໍ່ທ້ັ້ນສຸ້ກ ຫ້ຼື ເຮ້ັດໃຫ້ສຸ້ກດ້ວ້ຍກ້ານຕ້ົ້ມ ຫ້ຼື ກ້ານໜ້ຶ້ງ), ແຊ່ແຂ້ງ.
58	07.11	ສ້ັ້ກທ້ີ່ຮ້ັກສ້ໍ້ານ້ ້ໍ້ໄວ້ຊ້ົ່ວຄ້ໍ້ານ (ຕ້ິ້ວຢ້ໍ່ານ, ດ້ວ້ຍແກ້ັສຊ້ັ້ນເຟ ໄດ້ອ້ອກ້ໄຊ້ດ ຫ້ຼື ແຊ່ນ້ ້ໍ້ກ້ເກ້ືອ, ໃນ ກ້ານ້ະຖ້ັ້ນ ຫ້ຼື ສ້ານອ້ື່ນໆ ໃຊ້ສ້ໍ້າລ້ັບຮ້ັບປ້ະກ້ັນໃນກ້ານຮ້ັກສ້ໍ້າຊ້ົ່ວຄ້ໍ້ານເປ້ັນຕ້ົ້ນ), ແຕ່ໃນ ສ້ະພ້ານ ດ້ັ່ງກ້ໍ່າວ ນ້ ້ີ້ແມ່ນ ບ້ໍ່ເໝ້ໍ້າະແກ່ກ້ານ ບ້ໍ້ລ້ິ ໂພກໃນທ້ັນທ້ີ.
59	07.12	ພ້ືດສ້ັ້ກແຫ້ັ້ງ, ທ້ັ້ງຕ້ົ້ນ ຫ້ຼື ທ້ັ້ງຫ້ິວ, ຕ້ັດເປ້ັນສ່ວ້ນ, ເປ້ັນຕ້ອ້ນ, ບ້ິດ ຫ້ຼື ບ້ິດເປ້ັນຜ້ົ້ງລ້ະອ້ຽດກ້ໍ່ຕ້ໍາມ, ແຕ່ບ້ໍ່ ທ້ັ້ນປຸ້ງແຕ່ງເປ້ັນຢ້ໍ່າງອ້ື່ນ.
60	07.13	ພ້ືດສ້ັ້ກຕ້ະກ້ຼ້ນຖ້ົ່ວ, ເອ້ົ້ໍາເປ້ືອກອ້ອກ, ຈ້ະເອ້ົ້ໍາເຍ້ືອ້ອ້ອກ ຫ້ຼື ເຮ້ັດໃຫ້ແ້ຍກ ອ້ອກຈ້ໍ່າກ້ັ້ນ ຫ້ຼື ບ້ໍ່ກ້ຳຕ້ໍາມ.
61	07.14	ຫ້ິວມ້ັ້ນຕ້ົ້ນ, ມ້ັ້ນເທ້ດ, ມ້ັ້ນດ້ໍ້າງ, ສ້ໍ້າເລ້ຍ, ເຈ້ຣຸ້ຊ້ໍ້າແລ້ມ ອ້ໍ້ານ້ຕ້ິໂຊ້ກ ແລ້ະ ຮ້ໍ້າກ ຫ້ຼື ຫ້ິວທ້ີ່ມ້ີລ້ັກສ້ະນ້ະຄ້ໍ້າຍຄ້ຽ້ງ ທ້ີ່ ມ້ີທ້ໍ້າດແປ້ັ້ງ, ສ້ິດ, ແຊ່ເຢ້ັນ, ແຊ່ແຂ້ງ ຫ້ຼື ແຫ້ັ້ງ, ເຖ້ິງ ແມ່ນວ່ໍ້າຈ້ະຕ້ັດເປ້ັນຕ້ອ້ນ ຫ້ຼື ລ້ັກສ້ະນ້ະເປ້ັນເມ້ັດ, ເປ້ັນກ້ອ້ນ; ໃນຂ້ອ້ງສ້ໍ້າ ຫ້ຼື ບ້ໍ່ກ້ຳ ຕ້ໍາມ.
62	08.01	ໝ້ໍ້າກພ້ໍ້າວ, ໝ້ໍ້າກໄມ້ເປ້ືອກແ້ຂ້ງພ້ັນ້ບ້ຣ້ໍ້າຊ້ິ້ລ, ແ້ກ່ນໝ້ໍ້າກ ມ່ວ້ງ ຫ້ິ ມ້ະ ພ້ານ, ສ້ິດ ຫ້ຼື ແຫ້ັ້ງ, ບ້ໍ່ມ້ີເປ້ືອກ ຫ້ຼື ແ້ກ້ະເອ້ົ້ໍ້າເປ້ືອກອ້ອກ ຫ້ຼື ບ້ໍ່ກ້ຳຕ້ໍາມ.
63	08.02	ໝ້ໍ້າກໄມ້ເປ້ືອກແ້ຂ້ງອ້ື່ນໆ, ສ້ິດ ຫ້ຼື ແຫ້ັ້ງ, ຈ້ະເອ້ົ້ໍ້າເປ້ືອກອ້ອກ ຫ້ຼື ບ້ໍ່ກ້ຳຕ້ໍາມ.
64	08.03	ໝ້ໍ້າກກ້ອ້ຍ, ລ້ວ້ມທ້ັ້ງໝ້ໍ້າກໄມ້ຕ້ະກ້ຼ້ນກ້ອ້ຍ, ສ້ິດ ຫ້ຼື ແຫ້ັ້ງ.

65	08.04	ໝາກອຶນທະຜະລາ, ໝາກເດື່ອ, ໝາກນັດ, ໝາກອາໂວຄາໂດ, ໝາກສີດາ, ໝາກ ມ່ວງ ແລະ ໝາກມັງຄຸດ, ສົດ ຫຼື ແຫ້ງ.
66	08.05	ໝາກໄມ້ຈຳພວກໝາກກ້ຽງ, ສົດ ຫຼື ແຫ້ງ.
67	08.06	ອະງຸ່ນ, ສົດ ຫຼື ແຫ້ງ.
68	08.07	ໝາກແຕງ (ລວມທັ້ງໝາກແຕງໂມ) ແລະ ໝາກໜຸ່ງ, ສົດ.
69	08.08	ໝາກແອບເປິ້ນ, ໝາກແພຣ໌ ແລະ ໝາກຄວິນ, ສົດ.
70	08.09	ໝາກແອປຣິຄອດ, ໝາກເຊີຣີ, ໝາກຄາຍ (ລວມທັ້ງເນກທາຣິນ), ພລຳ ແລະ ສະ ໂລສ໌, ສົດ.
71	08.10	ໝາກໄມ້ອື່ນໆ, ສົດ.
72	08.11	ໝາກໄມ້, ໝາກໄມ້ເປືອກແຂງ, ບໍ່ທັນສຸກ ຫຼື ເຮັດໃຫ້ສຸກດ້ວຍການຕົ້ມ ຫຼື ດ້ວຍອາຍນ້ຳ, ແຊ່ແຂງ, ຈະໃສ່ນ້ຳຕານ ຫຼື ສານຫວານອື່ນ ຫຼື ບໍ່ກໍ່ຕາມ.
73	08.12	ໝາກໄມ້ ແລະ ໝາກໄມ້ເປືອກແຂງທີ່ຮັກສາໄວ້ຊົ່ວຄາວ (ດ້ວຍອາຍ ມາດ ຫຼື ແຊ່ນ້ຳເກືອ, ແຊ່ນ້ຳກຳມະຖັນ ຫຼື ໃສ່ສານກັນບູດອື່ນໆ ສຳລັບຮັກສາໄວ້ຊົ່ວ ຄາວເປັນຕົ້ນ), ໃນ ສະພາບທີ່ບໍ່ເໝາະສຳລັບການບໍລິ ໂພກໂດຍທັນ ທີ.
74	08.13	ໝາກໄມ້ແຫ້ງ, ນອກຈາກໝາກໄມ້ຊະນິດທີ່ບົ່ງໄວ້ແຕ່ລະຫັດເຄົ້າ 08.01 ຫາ 08.06; ລວມທັ້ງໝາກ ໄມ້ເປືອກແຂງ ແລະ ໝາກໄມ້ແຫ້ງຢູ່ໃນໝວດນີ້ປະສົມກັນ.
75	08.14	ເປືອກໝາກໄມ້ຈຳພວກໝາກກ້ຽງ ຫຼື ເປືອກໝາກແຕງ (ລວມທັ້ງເປືອກໝາກໂມ), ສົດ, ແຊ່ແຂງ, ແຫ້ງ ຫຼື ມີການຮັກສາໄວ້ຊົ່ວຄາວ ດ້ວຍການ ແຊ່ໃນນ້ຳເກືອ, ແຊ່ນ້ຳຊັລເຟີ ຫຼື ໃສ່ສານກັນບູດອື່ນໆ
76	09.01	ກາເຟ, ຈະຂົ້ວ ຫຼື ແຍກຄາເຟອິນອອກ ຫຼື ບໍ່ກໍ່ຕາມ; ເປືອກ ແລະ ເຍື່ອ ກາເຟ; ຂອງແທນກາເຟທີ່ມີກາ ເຟປະສົມຢູ່, ຈະຢູ່ໃນອັດຕາສ່ວນປະສົມເທົ່າໃດກໍ່ຕາມ.
77	09.02	ຊາຈະປຸງແຕ່ງກ່ອນ ຫຼື ບໍ່ກໍ່ຕາມ.
78	09.03	ຊາມາເຕ.
79	09.04	ພິກໄທໃນຕະກູນ *ໄປເປີຣ໌* ລວມທັ້ງໝາກພິກໃນຕະກູນ *ແຄບຊິກາ* ຫຼື ຕະກູນ *ພິເມນຕາ*; ທີ່ແຫ້ງ, ບົດ ຫຼື ເຮັດ ເປັນຜົງ.
80	09.05	ຕົ້ນວານິລາ.
81	09.06	ອົບເຊີຍ ແລະ ດອກຕນອົບເຊີຍ.
82	09.07	ຕົ້ນໂຄລບສ໌ (ໝາກ, ດອກ ແລະ ກ້ານດອກ).
83	09.08	ໝາກຈັນເທດ, ດອກຈັນເທດ, ອາມອມ ແລະ ໝາກແໜ່ງ.
84	09.09	ເມັດອານີດ, ເມັດບາດຽນ, ເມັດຜັກຊີ, ເມັດຜັກອີຕູ່, ເມັດຄາຣາເວ, ເມັດຄ້ອມິນ ຫຼື ເມັດຈູນິເປີຣແບຣ໌ຣີ.
85	09.10	ຂີ້, ຫຍ້າຝຣັ່ນ, ຂີ້ໝົ້ນ (ເຄີຄ້ອມາ), ຕົ້ນໄທມ໌, ໃບເບ, ຜົງກະຫຼີ ແລະ ເຄື່ອງເທດອື່ນໆ.
86	10.01	ເຂົ້າວີດ ແລະ ເຂົ້າເມສລິນ.
87	10.02	ເຂົ້າໄຣ.
88	10.03	ເຂົ້າບາຣ໌ເລ.
89	10.04	ເຂົ້າໂອດ.
90	10.05	ເຂົ້າສາລີ (ເຂົ້າໂພດ).
91	10.06	ເຂົ້າ.
92	10.07	ເຂົ້າຊໍກ.
93	10.08	ເຂົ້າບັກວີດ, ເຂົ້າຟາງນົກເຂົາ ແລະ ເຂົ້ານົກ; ເມັດທັນຍະພືດອື່ນໆ.
94	11.01	ແປ້ງເຂົ້າວີດ ແລະ ແປ້ງເຂົ້າເມສລິນ.
95	11.02	ແປ້ງທັນຍາພືດອື່ນໆ ນອກຈາກແປ້ງເຂົ້າວີດ ຫຼື ແປ້ງເຂົ້າເມສລິນ.
96	11.03	ເມັດທັກ, ແປ້ງຫຍາບ ແລະ ແປ້ງທີ່ເປັນກ້ອນຊະນິດພິລເລທ໌ຂອງທັນຍາພືດ.

97	11.04	ເມັດທັນຍາພືດທີ່ຈັດແຕ່ງໂດຍວິທີອື່ນ (ຕົວຢ່າງ, ເອົາເປືອກອອກ, ເຮັດໃຫ້ແປ, ເຮັດເປັນເກັດ, ຝານ ຫຼື ບົດແຫຼກເປັນຕົ້ນ), ຍົກເວັ້ນເມັດເຂົ້າຢູ່ໃນ ລະຫັດເຄົ້າ 10.06; ໝໍ່ທັນຍາພືດ, ທັ່ງໝົດ, ເຮັດໃຫ້ແປ, ເປັນເກັດ, ໂມ້ ຫຼື ບົດມຸ່ນ.
98	11.05	ແປ້ງ, ແປ້ງຫຍາບ, ແປ້ງເປັນຝຸ່ນ, ເຮັດເປັນເກັດ, ເຮັດເປັນກ້ອນນ້ອຍໆ ແລະ ເກັດມັນ ຝຣັ່ງ.
99	11.06	ແປ້ງ, ແປ້ງຫຍາບ ແລະ ແປ້ງຝຸ່ນທີ່ໄດ້ຈາກພືດຜັກຕະກູນຖົ່ວທີ່ແຫ້ງຂອງລະຫັດເຄົ້າ 07.13, ຂອງສາຄູ ຫຼື ຈາກຮາກ ຫຼື ຫົວຂອງພືດຕາມລະຫັດເຄົ້າ 07.14 ຫຼື ຂອງຜະລິດຕະພັນທີ່ຢູ່ໃນໝວດທີ 8.
100	11.07	ເຂົ້າມອລທ໌, ຈະຂົ້ວ ຫຼື ບໍ່ກ່ຕາມ.
101	11.08	ແປ້ງມັນ; ແປ້ງອານູລິນ.
102	11.09	ໂປຣຕີນຂອງເຂົ້າວີດ ຈະແຫ້ງ ຫຼື ບໍ່ກ່ຕາມ.
103	12.01	ຖົ່ວເຫຼືອງ, ຈະບົດແຕກແລ້ວ ຫຼື ບໍ່ກ່ຕາມ.
104	12.02	ຖົ່ວດິນ, ບໍ່ທັນຂົ້ວ ຫຼື ບໍ່ທັນເຮັດໃຫ້ສຸກໂດຍວິທີອື່ນ, ຈະເອົາເປືອກອອກ ຫຼື ບົດແຕກແລ້ວ ຫຼື ບໍ່ກ່ຕາມ.
105	12.03	ນອນໝາກພ້າວແຫ້ງ.
106	12.04	ເມັດປ໋ານ, ຈະບົດແຕກແລ້ວ ຫຼື ບໍ່ກ່ຕາມ.
107	12.05	ເມັດເຣບ ຫຼື ເມັດໂຄລຊາ, ຈະບົດແຕກແລ້ວ ຫຼື ບໍ່ກ່ຕາມ.
108	12.06	ແກ່ນດອກຕະເວັນ, ຈະບົດແຕກແລ້ວ ຫຼື ບໍ່ກ່ຕາມ.
109	12.08	ແປ້ງ ແລະ ແປ້ງຫຍາບທີ່ເຮັດຈາກເມັດພືດ ຫຼື ໝາກໄມ້ທີ່ມີນ້ຳມັນ, ນອກຈາກທີ່ເຮັດ ຈາກມັສຕາດ.
110	12.09	ເມັດ, ໝາກໄມ້ ແລະ ເກສອນ, ສຳລັບແນວພັນປູກ.
111	12.10	ດອກຮອບ, ສິດ ຫຼື ແຫ້ງ, ບົດ, ຈະເຮັດເປັນຜົງ ຫຼື ໃນຮູບເປັນເມັດກົມ ຫຼື ບໍ່ກ່ຕາມ, ຜົງຢາງ ຫຼື ໃນຮູບແບບເພລເລດທ໌; ຊະນິດລູປູລິນ.
112	12.11	ຕົ້ນໄມ້ ແລະ ພາກສ່ວນຂອງຕົ້ນໄມ້ (ລວມທັ້ງເມັດ ແລະ ໝາກໄມ້), ຊະນິດທີ່ໃຊ້ຕົ້ນຕໍ ໃນການເຄື່ອງນ້ຳຫອມ, ໃນທາງການຢາ ຫຼື ໃຊ້ໃນການຂ້າແມງໄມ້, ຢາຂ້າເຊື້ອຣາ ຫຼື ຈຸດປະສົງທີ່ຄ້າຍຄືກັນ, ສິດ ຫຼື ແຫ້ງ, ຈະຕັດ, ບົດ ຫຼື ເຮັດເປັນຜົງລະອຽດແລ້ວ ຫຼື ບໍ່ກ່ຕາມ.
113	12.12	ໝາກຖົ່ວໂລຄັສທ໌, ສາຫ່ຽວທະເລ ແລະ ສາຫຼ່າຍທະເລອື່ນໆ, ຜັກກາດຫວານທີ່ໃຫ້ນ້ຳ ຕານ ແລະ ອ້ອຍສິດ, ແຊ່ເຢັ້ແຊ່ແຂງ ຫຼື ແຫ້ງ, ຈະບົດເປັນຜົງ ຫຼື ບໍ່ກ່ຕາມ; ເມັດແຂງ ແລະ ເນື້ອໃນຂອງແກ່ນໝາກໄມ້ ແລະ ຜະລິດຕະພັນອື່ນໆ ທີ່ໄດ້ຈາກພືດຜັກ (ລວມທັ້ງຮາກຊິໂຄຣີບໍ່ທັນຂົ້ວ, *ຊະນິດຊິໂຄຣຽມ ອິນທີບັສຊາຕິວມ*) ໃຊ້ເປັນອາຫານຄົນເປັນຕົ້ນ ຕໍ, ທີ່ບໍ່ໄດ້ລະບຸ ຫຼື ລວມໄວ້ໃນບ່ອນອື່ນ.
114	12.13	ເຟືອງ ແລະ ກາກຂອງທັນຍາພືດ, ທີ່ບໍ່ທັນຕີບແຕ່ງ, ຈະຫັ່ນ, ບົດ, ອັດ ຫຼື ເຮັດໃຫ້ເກາະກ້ອນໃນຮູບເມັດກົມແບບເພລເລດທ໌ ຫຼື ບໍ່ກ່ຕາມ.
115	12.14	ຜັກກາດໃຊ້ເປັນອາຫານສັດ, ຮາກພືດໃຊ້ເປັນອາຫານສັດ, ເຟືອງ, ຫຍ້າ, ຫຍ້າແຫ້ງລ້ຽງສັດ, ຜັກກະຫຼ່ຳລ້ຽງສັດ ແລະ ຜະລິດຕະພັນອາຫານສັດອື່ນໆ ທີ່ຄ້າຍຄືກັນ, ຈະເຮັດເກາະກ້ອນ, ເປັນຮູບເມັດກົມແບບພິລເລດທ໌ ຫຼື ບໍ່ກ່ຕາມ.
116	13.01	ຂີ້ຄັ່ງກັ່ງ; ຢາງໄມ້ຫ່ຳມະຊາດ, ຢາງຂອງຕົ້ນສົນ, ຢາງໄມ້ປະສົມ ແລະ ຢາງສົນໂອລີ ໂອເຣຊິນ (ຕົວຢ່າງ, ຢາງຫອມຫ່ຳມະຊາດ).
117	14.01	ວັດຖຸຈາກພືດຈຳພວກໃຊ້ຕນຕໍ່ໃນການຈັກສານ ຫຼື ເຄື່ອງເຮັດດ້ວຍມື (ຕົວຢ່າງ, ໄມ້ໄຜ່, ຫວາຍ, ອໍ້, ຄ້າ, ຫວາຍເຄືອ, ຕົ້ນປ໋ານ, ຫຍ້າຈາກທັນຍາພືດ, ທີ່ເຮັດໃຫ້ສະອາດ, ຟອກ ຫຼື ຍ້ອມສີ, ເປືອກຕົ້ນໄລມ໌).
118	14.04	ຜະລິດຕະພັນຈາກພືດ ທີ່ບໍ່ໄດ້ລະບຸ ຫຼື ລວມໄວ້ໃນບ່ອນອື່ນ.
119	15.01	ໄຂມັນໝູ (ລວມທັ້ງນ້ຳມັນໝູ) ແລະ ໄຂມັນສັດປີກ, ນອກຈາກທີ່ໄດ້ລະບຸໄວ້ໃນລະ ຫັດເຄົ້າ 02.09 ຫຼື 15.03.
120	15.02	ໄຂມັນຂອງສັດປະເພດງົວຄວາຍ, ແກະ ຫຼື ແບ້, ນອກຈາກທີ່ລະບຸໄວ້ໃນລະຫັດເຄົ້າ 15.03.

121	15.03	ໄຂມັນສະເຕຍຣິນ, ໄຂມັນແຫຼວຂອງໝູ, ໄຂມັນໂອເລໂອສະເຕຍຣິນ, ໄຂມັນສັດ ອື່ນໆ, ນ້ຳມັນໄຂສັດທີ່ບໍ່ທັນປັ່ນ ຫຼື ບໍ່ທັນຜະສົມ ຫຼື ຈັດແຕ່ງເປັນຢ່າງອື່ນ.
122	15.04	ໄຂມັນ ແລະ ນ້ຳມັນ ແລະ ເສດເຫຼືອຂອງສິ່ງດັ່ງກ່າວ, ທີ່ໄດ້ມາຈາກປາ ຫຼື ສັດທະເລທີ່ລ້ຽງລູກດ້ວຍນ້ຳນົມ, ຈະກັ່ນກອງແລ້ວ ຫຼື ບໍ່ກໍ່ຕາມ, ແຕ່ຍັງບໍ່ທັນໄດ້ດັດແປງທາງເຄມີ.
123	15.05	ໄຂຂົນສັດ ແລະ ສານຈຳພວກໄຂມັນທີ່ໄດ້ມາຈາກສິ່ງດັ່ງກ່າວ (ລວມທັງລາໂນລິນ).
124	15.06	ໄຂມັນ ແລະ ນ້ຳມັນອື່ນໆ ທີ່ໄດ້ຈາກສັດ ແລະ ເສດເຫຼືອຂອງສິ່ງດັ່ງກ່າວ, ຈະກັ່ນຕອງແລ້ວ ຫຼື ບໍ່ກໍ່ຕາມ, ແຕ່ຍັງບໍ່ທັນດັດແປງທາງເຄມີ.
125	15.07	ນ້ຳມັນຖົ່ວເຫຼືອງ ແລະ ເສດເຫຼືອຂອງສິ່ງດັ່ງກ່າວ, ຈະກັ່ນກອງແລ້ວ ຫຼື ບໍ່ກໍ່ຕາມ, ແຕ່ຍັງບໍ່ທັນໄດ້ດັດແປງທາງເຄມີ.
126	15.08	ນ້ຳມັນຖົ່ວດິນ ແລະ ເສດສ່ວນຂອງສິ່ງດັ່ງກ່າວ, ຈະກັ່ນກອງແລ້ວ ຫຼື ບໍ່ກໍ່ຕາມ, ແຕ່ຍັງບໍ່ທັນໄດ້ດັດແປງທາງເຄມີ.
127	15.09	ນ້ຳມັນໝາກກອກ ແລະ ເສດເຫຼືອຂອງສິ່ງດັ່ງກ່າວ, ຈະກັ່ນຕອງແລ້ວ ຫຼື ບໍ່ກໍ່ຕາມ, ແຕ່ບໍ່ທັນໄດ້ ດັດ ແປງທາງເຄມີ.
128	15.10	ນ້ຳມັນອື່ນໆ ແລະ ເສດເຫຼືອຂອງສິ່ງດັ່ງກ່າວ, ທີ່ໄດ້ມາຈາກນ້ຳມັນໝາກກອກ, ຈະກັ່ນຕອງແລ້ວ ຫຼື ບໍ່ກໍ່ຕາມ, ແຕ່ບໍ່ທັນດັດແປງທາງເຄມີ, ລວມທັງສິ່ງປະສົມຂອງນ້ຳມັນເຫຼົ່ານີ້ ຫຼື ສິ່ງເສດເຫຼືອກັບນ້ຳມັນ ຫຼື ສິ່ງເສດເຫຼືອຂອງລະຫັດເຄ້ົາ 15.09.
129	15.11	ນ້ຳມັນປາມ ແລະ ເສດເຫຼືອຂອງສິ່ງດັ່ງກ່າວ, ຈະກັ່ນກອງແລ້ວ ຫຼື ບໍ່ກໍ່ຕາມ, ແຕ່ບໍ່ທັນດັດແປງທາງເຄມີ.
130	15.12	ນ້ຳມັນທີ່ໄດ້ຈາກດອກຕາເວັນ, ດອກຄຳຝອຍ ຫຼື ດອກຝ້າຍ ແລະ ເສດເຫຼືອຂອງມັນ, ຈະກັ່ນຕອງແລ້ວ ຫຼື ບໍ່ກໍ່ຕາມ, ແຕ່ບໍ່ທັນດັດແປງທາງເຄມີ.
131	15.13	ນ້ຳມັນໝາກພ້າວ, ນ້ຳມັນປາມ ຫຼື ນ້ຳມັນບາບາດູ ແລະ ເສດເຫຼືອຂອງສິ່ງດັ່ງກ່າວ ຫຼື ບໍ່ກໍ່ຕາມ, ແຕ່ບໍ່ທັນດັດ ແປງທາງເຄມີ.
132	15.14	ນ້ຳມັນເຣບ, ນ້ຳມັນໂຄລຊາ ຫຼື ນ້ຳມັນມັສຕາດ ແລະ ສິ່ງເສດເຫຼືອຂອງສິ່ງດັ່ງກ່າວ, ຈະ ເຮັດໃຫ້ບໍລິສຸດ ຫຼື ບໍ່ກໍ່ຕາມ, ແຕ່ຕ້ອງຍັງບໍ່ໄດ້ຜ່ານການດັດແປງທາງເຄມີ.
133	15.15	ໄຂມັນອື່ນໆ ແລະ ນ້ຳມັນພືດ (ລວມທັງນ້ຳມັນໂຈໂຈບາ) ແລະ ເສດເຫຼືອຂອງນ້ຳມັນ ຫຼື ບໍ່ກໍ່ຕາມ, ແຕ່ບໍ່ທັນດັດ ແປງທາງເຄມີ.
134	15.16	ໄຂມັນ ຫຼື ນ້ຳມັນສັດ ຫຼື ພືດ ແລະ ເສດເຫຼືອຂອງສິ່ງດັ່ງກ່າວ, ທີ່ຜ່ານກຳ ມະວິທີໄຮໂດຣເຈນ ພຽງບາງສ່ວນ ຫຼື ທັ້ງໝົດ, ອິນເຕີ-ເອສເທີຣິຟິເຄເຊີນ, ຣີເອສເຕີຣ໌ຣິຟິເຄເຊີນ ຫຼື ກຳ ມະວິທີອີເລດີໄນເຊເຊີນ, ເຖິງຈະກັ່ນຕອງ ແລ້ວ ຫຼື ບໍ່ກໍ່ຕາມ, ແຕ່ບໍ່ທັນໄດ້ປຸງແຕ່ງດ້ວຍວິທີອື່ນ.
135	15.17	ເນີຍທຽມ ມາກກາຣີນ; ປະສົມ ຫຼື ປຸງແຕ່ງເປັນອາຫານຈາກໄຂມັນ ຫຼື ນ້ຳມັນໄດ້ຈາກ ສັດ ຫຼື ພືດ ຫຼື ຈາກເສດ ເຫຼືອຂອງໄຂມັນ ແລະ ນ້ຳມັນຕ່າງຊະນິດທີ່ຈັດໄວ້ໃນໝວດນີ້, ນອກຈາກແຕ່ໄຂ ແລະ ນ້ຳມັນທີ່ເປັນອາຫານ ແລະ ເສດເຫຼືອຂອງມັນທີ່ ຈັດໄວ້ໃນລະຫັດເຄ້ົາ 15.16.
136	15.18	ເຮັດໃຫ້ສຸກ, ຕົ້ມອົກຊິ, ສະກັດເອົານ້ຳອອກ, ເປົ່າລົມໂດຍໃຊ້ຄວາມຮ້ອນໃນສູນຍາກາດ ຫຼື ດັດແປງທາງເຄມີ ຢ່າງອື່ນ, ຍົກເວັ້ນທີ່ບົ່ງໄວ້ໃນລະຫັດເຄ້ົາ 15.16; ປະສົມ ຫຼື ການຈັດແຕ່ງທີ່ບໍລິໂພກບໍ່ໄດ້ຈາກ ໄຂມັນ ຫຼື ນ້ຳມັນ ສັດ ຫຼື ພືດ ຫຼື ເສດເຫຼືອຕ່າງໆ ຂອງໄຂມັນ ຫຼື ນ້ຳມັນທີ່ໄດ້ຈັດໄວ້ໃນ ໝວດນີ້, ບໍ່ໄດ້ລະບຸ ຫຼື ລວມໄວ້ໃນບ່ອນ ອື່ນ.
137	15.20	ກລີເຊີຣອລ, ນ້ຳມັນດິບ; ນ້ຳກລີເຊີຣອລ ແລະ ສານລະລາຍກລີເຊີຣອລ.
138	15.21	ໄຂທີ່ໄດ້ຈາກພືດ (ນອກຈາກຫຼືຫຼືເຊໄຣດ), ຂີ້ເຜົ້ຶງຈາກແມງເຜົ້ຶງ, ໄຂທີ່ໄດ້ຈາກແມງໄມ້ອື່ນໆ ແລະ ໄຂທີ່ໄດ້ຈາກປາວານ, ຈະກັ່ນກອງ ຫຼື ໃສ່ສີແລ້ວ ຫຼື ບໍ່ກໍ່ຕາມ.
139	15.22	ໄຂເດກຖາສ; ສິ່ງເສດເຫຼືອຈາກການນຳສານໄຂມັນ ຫຼື ໄຂໄດ້ຈາກສັດ ຫຼື ພືດໄປຜ່ານ ກຳ ມະວິທີ.

140	16.01	ໄສ້ກອກ (ໄສ້ອິ່ວ) ແລະ ຜະລິດຕະພັນຄ້າຍຄືກັນ, ທີ່ເຮັດຈາກຊິ້ນສັດ, ສ່ວນອື່ນໆ ຂອງສັດ ຫຼື ຂອງເລືອດສັດ; ອາຫານປຸງແຕ່ງທີ່ມີສ່ວນປະສົມຂອງຜະລິດຕະພັນ ເຫຼົ່ານີ້ເປັນຫຼັກ.
141	16.02	ຊິ້ນສັດ, ສ່ວນອື່ນໆ ຂອງສັດ ຫຼື ຂອງເລືອດສັດ ທີ່ປຸງແຕ່ງ ຫຼື ເກັບຮັກ ສາໄວ້ໃນຮູບແບບອື່ນ ເພື່ອບໍ່ໃຫ້ເສຍຄຸນ.
142	16.03	ສິ່ງສະກັດ ແລະ ນ້ຳຄັ້ນຂອງຊິ້ນສັດ, ຂອງປາ ຫຼື ຂອງສັດນ້ຳຈຳພວກຄຣັສຕາຊຽນ (ກຸ້ງ, ຫອຍ, ປູ), ໂມລຸສ ຫຼື ຂອງສັດນ້ຳອື່ນໆ ທີ່ບໍ່ມີກະດູກສັນຫຼັງ.
143	16.04	ປາທີ່ປຸງແຕ່ງ ຫຼື ຮັກສາໄວ້ບໍ່ໃຫ້ເສຍຄຸນ, ໄຂ່ປາຄາເວຍ ແລະ ຂອງທີ່ໃຊ້ແທນໄຂ່ປາຄາເວຍທີ່ເຮັດຈາກໄຂ່ປາ.
144	16.05	ສັດນ້ຳທະເລຈຳພວກຄຣັສຕາຊຽນ, ສັດນ້ຳຈຳພວກໂມລຸສ ແລະ ສັດນ້ຳປະເພດບໍ່ມີ ກະດູກສັນຫຼັງ, ທີ່ໄດ້ປຸງ ແຕ່ງ ຫຼື ເກັບຮັກສາໄວ້ບໍ່ໃຫ້ເສຍຄຸນ.
145	18.01	ເມັດໂກໂກ້, ເປັນເມັດ ຫຼື ເປັນເມັດຫັກ, ດິບ ຫຼື ຂົ້ວແລ້ວ.
146	18.02	ເປືອກນອກ, ເປືອກໃນ, ເຍື່ອຫຸ້ມ (ເຍື່ອໃນ) ແລະ ເສດອື່ນໆ ຂອງໂກໂກ້.
147	18.03	ແປ້ງໝຽວຂອງໂກໂກ້, ຈະເອົາໄຂມັນອອກ ຫຼື ບໍ່ກໍ່ຕາມ.
148	18.04	ເນີຍໂກໂກ້, ໄຂມັນ ແລະ ນ້ຳມັນໂກໂກ້.
149	18.05	ແປ້ງໂກໂກ້, ທີ່ບໍ່ໄດ້ໃສ່ນ້ຳຕານ ຫຼື ສານຫວານອື່ນໆ.
150	18.06	ຊອກໂກແລັດ ແລະ ອາຫານປຸງແຕ່ງອາຫານອື່ນໆ ທີ່ມີໂກໂກ້
151	19.01	ສິ່ງສະກັດຈາກເຂົ້າມອລທ໌; ລວມທັງອາຫານປຸງແຕ່ງທີ່ເຮັດຈາກແປ້ງ ຫຼື ແປ້ງຫຍາບ, ຈາກສະຕາດຈ໌ ຫຼື ສິ່ງສະກັດຈາກເຂົ້າມອລທ໌, ບໍ່ມີແປ້ງໂກໂກ້ ຫຼື ມີແປ້ງໂກໂກ້ໜ້ອຍ ກວ່າ 50% ໂດຍນ້ຳໜັກ, ຊຶ່ງບໍ່ໄດ້ລະບຸ ຫຼື ລວມໄວ້ບ່ອນອື່ນ; ອາຫານປຸງແຕ່ງທີ່ເຮັດ ຈາກສິ່ງດັ່ງກ່າວຂອງລະຫັດເຄ້ົາ 04.01 ເຖິງ 04.04, ບໍ່ມີແປ້ງໂກໂກ້ ຫຼື ມີແປ້ງໂກໂກ້ ນ້ອຍກວ່າ 5% ໂດຍນ້ຳໜັກ, ຊຶ່ງບໍ່ໄດ້ລະບຸ ຫຼື ລວມໄວ້ໃນບ່ອນອື່ນ.
152	19.02	ພາສຕາ, ຈະເຮັດໃຫ້ສຸກແລ້ວ ຫຼື ຍັງດິບ (ຊິ້ນສັດ ຫຼື ສິ່ງອື່ນ) ຫຼື ປຸງແຕ່ງດ້ວຍວິທີອື່ນ ຫຼື ບໍ່ກໍ່ຕາມ, ສະປາເກັດ ຕີ, ມາກາໂຣນີ, ເຝີ, ລາຊານຍາ, ນອກຕີ, ຣາວີໂອລີ, ຄາເນລໂລນີ; ລວມທັງຄັສຄັສ, ຈະປຸງແຕ່ງແລ້ວ ຫຼື ບໍ່ກໍ່ຕາມ.
153	19.03	ສາຄູ ແລະ ສິ່ງທົດແທນທີ່ປຸງແຕ່ງຈາກສາຄູ ທີ່ເຮັດຈາກສຕາຣຈ໌, ເປັນເກັດ, ເປັນເມັດແບບເມັດໄຂ່ມຸກ, ເປັນເມັດດັດແລ້ວ ຫຼື ໃນຮູບລັກສະນະທີ່ຄ້າຍຄຽງກັນ.
154	19.04	ອາຫານປຸງແຕ່ງຈາກທັນຍາພືດ ຫຼື ຜະລິດຕະພັນທັນຍາພືດ, ທີ່ເຮັດໃຫ້ພອງ, ຂົ້ວ, ອົບ ຫຼື ປີ້ງ (ຕົວຢ່າງ, ຄອນເຟຣັກ); ລວມທັງທັນຍາພືດ (ນອກຈາກສາລີ ເປັນເມັດ), ເຊິ່ງ ເຮັດໃຫ້ສຸກມາກ່ອນແລ້ວ ຫຼື ປຸງແຕ່ງດ້ວຍວິທີອື່ນ, ເຊິ່ງບໍ່ໄດ້ບໍ່ລະບຸ ຫຼື ລວມໄວ້ຢູ່ບ່ອນ ອື່ນ.
155	19.05	ເຂົ້າຈີ່, ເຂົ້າໜົມທີ່ເຮັດຈາກແປ້ງເພສທຣີ, ເຄັກ, ບິສກິດ, ເຂົ້າໜົມທີ່ໄດ້ຈາກການອົບ, ຈະມີໂກໂກ້ ຫຼື ບໍ່ກໍ່ຕາມ; ເຂົ້າໜົມເວເຟີຣ໌ທີ່ຕິດກັນເປັນຊັ້ນ, ແຄບຊູນເປົ໋າຂະນົດເໝາະ ສຳລັບໃຊ້ບັນຈຸຢາ, ເຂົ້າໜົມເວເຟີຣ໌ ເປັນແຜ່ນ, ເຈ້ຍທີ່ເຮັດດ້ວຍເຂົ້າ (ແຜ່ນຍໍ່) ແລະ ຜະລິດຕະພັນທີ່ຄ້າຍຄຽງກັນ.
156	20.01	ພືດຜັກ, ໝາກໄມ້, ໝາກໄມ້ເປືອກແຂງ ແລະ ສ່ວນອື່ນໆ ທີ່ບໍລິໂພກໄດ້ຂອງຕົ້ນໄມ້, ທີ່ປຸງແຕ່ງ ຫຼື ຮັກສາໄວ້ ບໍ່ໃຫ້ເສຍຄຸນດ້ວຍນ້ຳສົ້ມສາຍຊູ ຫຼື ກົດອາເຊຕິກ.
157	20.02	ໝາກເລັ່ນທີ່ຜ່ານການປຸງແຕ່ງແລ້ວ ຫຼື ຮັກສາໄວ້ບໍ່ໃຫ້ເສຍຄຸນ ໂດຍວິທີອື່ນທີ່ບໍ່ໃຊ້ນ້ຳສົ້ມສາຍຊູ ຫຼື ກົດອາເຊຕິກ.
158	20.03	ເຫັດ ແລະ ເຫັດໃຕ້ດິນຊະນິດທຣັຟເຟີລ, ທີ່ຜ່ານການປຸງແຕ່ງ ຫຼື ຮັກສາໄວ້ບໍ່ໃຫ້ເສຍຄຸນ ໂດຍວິທີອື່ນ ທີ່ບໍ່ໃຊ້ນ້ຳ ສົ້ມສາຍຊູ ຫຼື ກົດອາເຊຕິກ.
159	20.04	ພືດຜັກອື່ນໆ ທີ່ຜ່ານການປຸງແຕ່ງ ຫຼື ຮັກສາໄວ້ບໍ່ໃຫ້ເສຍຄຸນ ໂດຍວິທີອື່ນ ທີ່ບໍ່ໃຊ້ນ້ຳສົ້ມສາຍຊູ ຫຼື ກົດອາເຊຕິກ, ແຊ່ແຂງ, ນອກຈາກຜະລິດຕະພັນຂອງລະຫັດເຄ້ົາ 20.06.

160	20.05	ພືດຜັກອື່ນໆ ທີ່ຜ່ານການປຸງແຕ່ງ ຫຼື ຮັກສາໄວ້ບໍ່ໃຫ້ເສຍຄຸນ ໂດຍວິທີອື່ນທີ່ບໍ່ໃຊ້ນ້ຳສົ້ມ ສາຍຊູ ຫຼື ກົດອາເຊຕິກ, ບໍ່ແຊ່ແຂງ, ນອກຈາກຜະລິດຕະພັນໃນລະຫັດເຄົ້າ 20.06.
161	20.06	ພືດຜັກ, ໝາກໄມ້, ໝາກໄມ້ເປືອກແຂງ, ເປືອກໝາກໄມ້ ແລະ ສ່ວນອື່ນໆ ຂອງ ຕົ້ນໄມ້ທີ່ເກັບຮັກສາໄວ້ບໍ່ໃຫ້ເສຍຄຸນໂດຍນ້ຳຕານ (ດອງ, ເຊື່ອມ ຫຼື ຊຸບ).
162	20.07	ໝາກໄມ້ກວນ, ວຸ້ນໝາກໄມ້, ແປ້ງປຸກ ແລະ ແປ້ງໜຽວຂອງໝາກໄມ້ ເຊິ່ງເປັນສິ່ງ ປຸງແຕ່ງທີ່ໄດ້ຈາກການເຮັດ ໃຫ້ສຸກ, ຈະໃສ່ນ້ຳຕານ ຫຼື ໃສ່ສານຫວານອື່ນໆ ຫຼື ບໍ່ກໍ່ຕາມ.
163	20.08	ໝາກໄມ້, ໝາກໄມ້ເປືອກແຂງ ແລະ ສ່ວນອື່ນໆ ທີ່ບໍ່ລິໂພກໄດ້ຂອງຕົ້ນໄມ້, ທີ່ຜ່ານການປຸງແຕ່ງ ຫຼື ຮັກສາໄວ້ບໍ່ໃຫ້ເສຍຄຸນດ້ວຍວິທີອື່ນ, ຈະໃສ່ນ້ຳຕານ ຫຼື ສານຫວານອື່ນໆ ຫຼື ເຫຼົ້າ ຫຼື ບໍ່ກໍ່ຕາມ, ທີ່ບໍ່ໄດ້ລະບຸ ຫຼື ລວມໄວ້ໃນບ່ອນອື່ນ.
164	20.09	ນ້ຳໝາກໄມ້ (ລວມທັງນ້ຳເຫຼົ້າໝາກອາງຸ່ນທີ່ບໍ່ທັນໝັກ) ແລະ ນ້ຳພືດຜັກ, ທີ່ບໍ່ທັນໝັກ ແລະ ບໍ່ໃສ່ເຫຼົ້າ, ຈະຕື່ມ ນ້ຳຕານ ຫຼື ໃສ່ສານຫວານອື່ນໆ ຫຼື ບໍ່ກໍ່ຕາມ.
165	21.01	ສິ່ງສະກັດ, ຫົວເຊື້ອ ຫຼື ສິ່ງຂຸ້ງວຂອງກາເຟ, ຂອງຊາ ຫຼື ຂອງຊາມາເຕ ແລະ ການປຸງ ແຕ່ງຈາກຜະລິດຕະ ພັນເຫຼົ່ານີ້ເປັນຫຼັກ ທີ່ມີກາເຟ, ຊາ ຫຼື ຊາມາເຕ; ຊິກໍເຣຂົ້ວແລ້ວ ແລະ ສິ່ງທົດແທນອື່ນໆ ທີ່ຂົ້ວແລ້ວຂອງກາເຟ, ສິ່ງສະກັດ, ຫົວເຊື້ອ ແລະ ສິ່ງຂຸ້ງວຂອງ ສິ່ງດັ່ງກ່າວ.
166	21.02	ຍີສທ໌ (ມີຊີວິດ ຫຼື ຕາຍ); ຈຸລິນຊີແຊນດຽວອື່ນໆ ທີ່ຕາຍແລ້ວ (ແຕ່ບໍ່ໄດ້ລວມເອົາວັກ ຊີນຂອງລະຫັດເຄົ້າ 30.02); ແປ້ງຟູທີ່ປຸງແຕ່ງແລ້ວ.
167	21.03	ນ້ຳຊອສ ແລະ ການປຸງແຕ່ງສຳລັບນ້ຳຊອສ; ສິ່ງປະສົມສຳລັບໃຊ້ປຸງແຕ່ງ ລົດຊາດ; ແປ້ງ ແລະ ແປ້ງຫຍາບຂອງມັສຕາດ໌ ແລະ ແປ້ງມັສຕາດ໌ ທີ່ຜ່ານການປຸງແຕ່ງ ແລ້ວ.
168	21.04	ນ້ຳຊຸບ ແລະ ນ້ຳຊຸບຊຸ້ນ ແລະ ການປຸງແຕ່ງນ້ຳຊຸບ ຫຼື ນ້ຳຊຸບຊຸ້ນດັ່ງກ່າວທີ່ຜ່ານການ ປຸງແຕ່ງແລ້ວ; ອາຫານປຸງແຕ່ງທີ່ມີສ່ວນປະສົມລວມເຂົ້າເປັນເນື້ອດຽວກັນ.
169	21.05	ກະແລມ ແລະ ນ້ຳແຂງອື່ນໆ ທີ່ບໍ່ລິໂພກໄດ້, ຈະມີໂກໂກ້ ຫຼື ບໍ່ກໍ່ຕາມ.
170	21.06	ອາຫານປຸງແຕ່ງທີ່ບໍ່ໄດ້ລະບຸ ຫຼື ລວມໄວ້ໃນບ່ອນອື່ນ.
171	22.01	ນ້ຳ, ລວມທັງນ້ຳແຮ່ທຳມະຊາດ ຫຼື ນ້ຳແຮ່ທຽມ ແລະ ນ້ຳອັດລົມ, ບໍ່ໄດ້ຕື່ມນ້ຳຕານ ຫຼື ສານຫວານອື່ນໆ ແລະ ບໍ່ໄດ້ປຸງແຕ່ງກິ່ນ; ນ້ຳກ້ອນ ແລະ ຫິມະ.
172	22.02	ນ້ຳ, ລວມທັງນ້ຳແຮ່ທາດ ແລະ ນ້ຳອັດລົມທີ່ຕື່ມນ້ຳຕານ ຫຼື ສານຫວານອື່ນໆ ຫຼື ປຸງແຕ່ງກິ່ນ ແລະ ເຄື່ອງດື່ມ ອື່ນໆ ບໍ່ມີທາດເຫຼົ້າ, ແຕ່ບໍ່ລວມເອົານ້ຳໝາກໄມ້ ຫຼື ນ້ຳພືດຜັກຂອງລະຫັດເຄົ້າ 20.09.
173	22.03	ເບຍທີ່ເຮັດຈາກເຂົ້າມອລທ໌.
174	22.04	ເຫຼົ້າໄວນ໌ທີ່ເຮັດຈາກອະງຸ່ນສົດ, ລວມທັງເຫຼົ້າໄວນ໌ທີ່ຕື່ມທາດເຫຼົ້າ; ນ້ຳອະງຸ່ນທີ່ບໍ່ທັນໝັກ, ນອກຈາກຈຳ ພວກທີ່ລະບຸໄວ້ໃນລະຫັດເຄົ້າ 20.09.
175	22.05	ເຫຼົ້າເວີຣ໌ມຸດ ແລະ ເຫຼົ້າໄວນ໌ອະງຸ່ນສົດອື່ນໆ ທີ່ປຸງແຕ່ງໂດຍອາໃສຕົ້ນໄມ້ ຫຼື ສານຫອມ.
176	22.06	ເຄື່ອງດື່ມອື່ນໆ ທີ່ໄດ້ຈາກການໝັກ (ຕົວຢ່າງ, ໄຊເດີ, ເພີຣຣີ ແລະ ມີດ); ເຄື່ອງດື່ມປະສົມທີ່ໄດ້ຈາກການ ໝັກ, ເຄື່ອງດື່ມທີ່ບໍ່ມີທາດເຫຼົ້າ, ທີ່ບໍ່ໄດ້ລະບຸ ຫຼື ລວມໄວ້ໃນບ່ອນ ອື່ນໆ.
177	22.07	ເຫຼົ້າເອທິລ ບໍ່ໄດ້ປ່ຽນທຳມະຊາດມີຄວາມແຮງຂອງທາດເຫຼົ້າໂດຍປະລິມານ 80% ຂຶ້ນໄປ; ເຫຼົ້າເອທິລ ແລະ ເຫຼົ້າອື່ນໆ ທີ່ປ່ຽນແປງສະພາບແລ້ວຈະມີຄວາມແຮງຂອງເຫຼົ້າເທົ່າໃດກໍ່ຕາມ.
178	22.08	ເຫຼົ້າເອທິລ ທີ່ບໍ່ໄດ້ປ່ຽນແປງສະພາບມີຄວາມແຮງຂອງທາດເຫຼົ້າ ໂດຍປະລິມານຕ່ຳກວ່າ 80% ໂວນ; ເຫຼົ້າລິເຄີ ຣ໌, ແລະ ເຄື່ອງດື່ມອື່ນໆ ທີ່ມີທາດເຫຼົ້າປະສົມ.
179	22.09	ນ້ຳສົ້ມ ແລະ ສິ່ງທີ່ໃຊ້ທົດແທນນ້ຳສົ້ມ ທີ່ບໍລິໂພກໄດ້ ທີ່ໄດ້ມາຈາກກົດອາເຊຕິກ.
180	23.01	ແປ້ງ, ຜົງ ແລະ ສິ່ງເກາະກ້ອນໃນຮູບຂອງກ້ອນກົມ, ຂອງຊິ້ນສັດ, ສ່ວນອື່ນຂອງສັດ, ຂອງປາ ແລະ ຂອງສັດ ນ້ຳຈຳພວກຄຣັສຕາຊຽນ, ໂມລຸສ ແລະ ສັດນ້ຳຈຳພວກທີ່ບໍ່ມີກະດູກສັນຫຼັງອື່ນໆ, ບໍ່ເໝາະແກ່ການບໍລິໂພກຂອງ ຄົນ; ກາກມັນສັດທີ່ຈືນເອົານ້ຳມັນອອກແລ້ວ.

181	23.02	ຮໍາ, ເສດຫັກ ຫຼື ເສດອື່ນໆ ຂອງຫັນຍາພືດ ຫຼື ພືດຕະກຸນຖົ່ວທີ່ໄດ້ຈາກການຮ່ອນຜ່ານເຂີ່ງ, ການໂມ້ ຫຼື ການຈີວິທີອື່ນໆ, ຈະເກາະກັນໃນຮູບຂອງກ້ອນກົມ ຫຼື ບໍ່ກໍ່ຕາມ.
182	23.03	ເສດຈາກການຜະລິດສະຕາຣ໌, ເສດຄ້າຍຄືກັນ, ການຫົ່ວບີດ, ການອ້ອຍ ແລະ ເສດຈາກຜະລິດນໍ້ຕານ, ຂີ້ຕະກອນ ແລະ ເສດຈາກຕົ້ມເຫຼົ້າ, ຈະເກາະກັນໃນຮູບກ້ອນກົມ ແລະ ເສດຈາກຜະລິດນໍ້ຕານ, ຂີ້ຕະກອນ ແລະ ເສດຈາກຕົ້ມເຫຼົ້າ, ຈະເກາະກັນໃນຮູບກ້ອນກົມ ຫຼື ບໍ່ກໍ່ຕາມ.
183	23.04	ການຖົ່ວເຫຼືອງ ແລະ ການແຂງອື່ນໆ, ຈະບົດ ຫຼື ເກາະກ້ອນໃນຮູບຂອງກ້ອນກົມ ຫຼື ບໍ່ກໍ່ຕາມ, ກ້ອນກົມ ຫຼື ບໍ່ກໍ່ຕາມ, ທີ່ໄດ້ຈາກການສະກັດນໍ້ມັນຖົ່ວເຫຼືອງ.
184	23.05	ການຖົ່ວດິນ ແລະ ການແຂງອື່ນໆ, ຈະບົດ ຫຼື ເກາະກັນໃນຮູບຂອງກ້ອນກົມ ຫຼື ບໍ່ກໍ່ ຕາມ, ທີ່ໄດ້ຈາກການສະກັດນໍ້ມັນໝາກຖົ່ວດິນ.
185	23.06	ການນໍ້ມັນ ແລະ ການແຂງອື່ນໆ, ຈະບົດ ຫຼື ເກາະກັນໃນຮູບຂອງກ້ອນກົມ ຫຼື ບໍ່ກໍ່ຕາມ, ທີ່ໄດ້ຈາກການສະກັດໄຂມັນ ຫຼື ນໍ້ມັນ, ນອກຈາກທີ່ໄດ້ລະບຸໃນລະຫັດເຄົ້າ 20.04 ຫຼື 23.05.
186	23.07	ຕະກອນໄດ້ຈາກການໝັກ ແລະ ບົ່ມເຫຼົ້າໄວນ໌; ຕະກອນລະບາຍເຫຼົ້າໄວນ໌.
187	23.08	ວັດຖຸ ແລະ ເສດຈາກພືດ, ການ ແລະ ຜະລິດຕະພັນສ້ໍາຮອງຈາກພືດ, ຈະເກາະກັນໃນຮູບກ້ອນກົມ ຫຼື ບໍ່ກໍ່ ຕາມ, ຊະນິດທີ່ໃຊ້ສ້ໍາລັບເປັນອາຫານສັດ, ທີ່ບໍ່ໄດ້ລະບຸ ຫຼື ລວມໄວ້ບ່ອນອື່ນໆ.
188	23.09	ອາຫານປຸງແຕ່ງທີ່ໃຊ້ສ້ໍາລັບລ້ຽງສັດ.
189	25.01	ເກືອ (ລວມທັງເກືອຮັບໃຊ້ເທິງໂຕະອາຫານ ແລະ ເກືອທີ່ປ່ຽນແປງສະພາບແລ້ວ) ແລະ ເກືອໂຊດຽມຄລໍໄຣດ໌ ບໍລິສຸດ ຫຼື ທາດແອນຕີ-ເຄກິ້ງປະສົມຢູ່ ຫຼື ບໍ່ກໍ່ຕາມ, ຈະ ຢູ່ໃນສະ ພາບລະລາຍໃນຂອງແຫຼວ ຫຼື ບໍ່ກໍ່ຕາມ; ນໍ້ທະ ເລ.
190	40.01	ຢາງທໍາມະຊາດ, ບາລາຕາ, ກັດຕາ-ເປີ້ຊາ, ກວາຍູ, ຊິເຄິ ແລະ ຢາງຢືດທໍາມະຊາດຄ້າຍຄຽງ, ໃນຮູບແບບ ລັກສະນະຂັ້ນຕົ້ນ ຫຼື ເປັນແຜ່ນ, ໃບ ຫຼື ແຜ່ນຍາວ.

ໝາຍເຫດ: ຫວຽດນາມຈະພິຈາລະນາໃຫ້ສິດທິພິເສດດ້ານພາສີຂາເຂົ້າ 0% ສ້ໍາລັບນໍ້ຕານ ແລະ ນໍ້ຕານດິບ ທີ່ມີແຫລ່ງກ້ໍາເນີດຈາກ ສປປ ລາວ

ລ້ໍາດັບ	HS Code AHTN 2012	ເນື້ອໃນລະອຽດ
	17.01	ນໍ້ຕານທີ່ໄດ້ຈາກອ້ອຍ ຫຼື ຈາກຫົວຜັກກາດຫວານ ແລະ ນໍ້ຕານຊູໂຄຣສ ບໍລິສຸດທາງເຄມີ, ໃນສະພາບເປັນກ້ອນແຂງ.
		- ນໍ້ຕານດິບ ທີ່ບໍ່ໄດ້ຕົ້ມສານປຸງແຕ່ງລິດຫອມ ຫຼື ສານແຕ່ງສີ:
1	1701.12.00	- - ທີ່ໄດ້ຈາກຫົວຜັກກາດຫວານ
2	1701.13.00	- - ນໍ້ຕານທີ່ໄດ້ຈາກອ້ອຍ ຕາມທີ່ໄດ້ລະບຸໄວ້ໃນຂໍ້ແນະນໍາຍ່ອຍ 2 ຂອງໝວດນີ້
3	1701.14.00	- - ນໍ້ຕານທີ່ໄດ້ຈາກອ້ອຍ
		- ອື່ນໆ:
4	1701.91.00	- - ທີ່ຕົ້ມສານປຸງແຕ່ງກິ່ນ ຫຼື ສານແຕ່ງສີ
	1701.99	- - ອື່ນໆ:
		- - - ນໍ້ຕານບໍລິສຸດ:
5	1701.99.11	- - - - ສີຂາວ
6	1701.99.19	- - - - ອື່ນໆ
7	1701.99.90	- - - ອື່ນໆ

ເອກະສານຊ້ອນທ້າຍ 02

ສິນຄ້າທີ່ບໍ່ຕ້ອງເສຍພາສີນຳເຂົ້າ ແລະ ອາກອນມູນຄ່າເພີ່ມ ເມື່ອນຳເຂົ້າໄປ ຫວຽດນາມ

ລຳດັບ	HS Code AHTN 2012	ເນື້ອໃນລະອຽດ	ໝາຍເຫດ
	06.04	ໃບໄມ້, ງ່າໄມ້ ແລະ ສ່ວນອື່ນຂອງຕົ້ນໄມ້, ທີ່ບໍ່ມີດອກ ຫຼື ມີດອກ, ຈູມຕິດ ແລະ ຫຍ້າ, ມອສ ແລະ ໄລເຄນ, ທີ່ເໝາະສຳລັບຕົບແຕ່ງເປັນຊໍ່ດອກໄມ້ ຫຼື ເພື່ອການ ປະດັບ, ສົດ, ແຫ້ງ, ຍ້ອມສີ, ເຄືອບ, ອາບຊຶມ ຫຼື ຕົບແຕ່ງຢ່າງດ້ວຍວິທີອື່ນ.	
•	0604.20	- ສົດ:	
1	0604.20.90	- - ອື່ນໆ	
	0604.90	- ສົດ:	
2	0604.90.90	- - ອື່ນໆ	
	07.01	ມັນຝລັ່ງ, ສົດ ຫຼື ແຊ່ເຢັນ.	ເປັນຫົວທີ່ໄດ້ ປອກເປືອກ ຫລື ບໍ່ໄດ້ປອກເປືອກ
3	0702.00.00	ໝາກເລັ່ນ, ສົດ ຫຼື ແຊ່ເຢັນ.	ເປັນໜ່ວຍ
	0703	ຫົວຜັກບົ່ວໃຫຍ່, ຫົວຜັກບົ່ວນ້ອຍ, ຫົວຜັກທຽມ, ຜັກຫອມບົ່ວ ແລະ ຜັກຈຳພວກ ຜັກທຽມອື່ນໆ, ສົດ ຫຼື ແຊ່ເຢັນ.	ເປັນຫົວ
	0704	ກະລ່ຳປີ, ກະລ່ຳປີດອກ, ກະລ່ຳກູດ, ຜັກຈຳພວກຜັກກາດຂາວ ແລະ ພືດຜັກທີ່ຄ້າຍຄືກັນໃນຕະກູນບຣາສສິກາ, ສົດ ຫຼື ແຊ່ເຢັນ ທີ່ສາມາດບໍລິໂພກໄດ້.	ເປັນຫົວ
	0705	ຜັກກາດຫອມ (ແລກຕູກາ ຊາວິຕາ) ແລະ ຊີໂຄຣີ (ຊະນິດຊິໂຄຣຽມ), ສົດ ຫຼື ແຊ່ເຢັນ.	ເປັນຕົ້ນ
	0706	ຫົວກາຣົດ, ເທີຣ໌ນິບ, ຫົວບີບທີ່ໃຊ້ເຮັດສະລັດ, ສານຊິໄຟ, ເຊເລຣິເອກ, ຫົວຜັກກາດຂາວ ແລະ ຫົວຂອງພືດທີ່ຄ້າຍຄຽງກັນ, ສົດ ຫຼື ແຊ່ເຢັນ.	ເປັນຫົວທີ່ໄດ້ ປອກເປືອກ ຫລື ບໍ່ໄດ້ປອກເປືອກ
4	0707.00.00	ໝາກແຕງສຸກ ແລະ ໝາກແຕງກວາ, ສົດ ຫຼື ແຊ່ເຢັນ.	ເປັນຫົວ
	0708	ພືດຜັກຕະກູນຖົ່ວ, ເອົາເປືອກອອກ ຫຼື ບໍ່ກໍ່ຕາມ, ສົດ ຫຼືແຊ່ເຢັນ.	ເປັນຫົວ
	0709	ພືດຜັກອື່ນໆ, ສົດ ຫຼື ແຊ່ເຢັນ.	ເປັນຕົ້ນ
	0710	ຈຳພວກພືດຜັກ (ບໍ່ທັນສຸກ ຫຼື ເຮັດໃຫ້ສຸກດ້ວຍການຕົ້ມ ຫຼື ການໜຶ້ງ), ແຊ່ແຂງ.	ເປັນຕົ້ນ (ບໍ່ທັນ ສຸກ ຫຼື ເຮັດໃຫ້ ສຸກດ້ວຍການ ຕົ້ມ ຫຼື ການ ໜຶ້ງ)
	0711	ຜັກທີ່ຮັກສາໄວ້ຊົ່ວຄາວ (ຕົວຢ່າງ, ດ້ວຍແກ໊ສຊັນເຟີ ໄດອອກໄຊດ໌ ຫຼື ແຊ່ນ້ຳເກືອ, ໃນ ກຳມະຖັນ ຫຼື ສານອື່ນໆ ໃຊ້ສຳລັບຮັບປະກັນໃນ ການຮັກສາຊົ່ວຄາວເປັນຕົ້ນ), ແຕ່ໃນ ສະພາບດັ່ງກ່າວນີ້ແມ່ນບໍ່ເໝາະ	ເປັນຕົ້ນ

		ແກ່ການບໍລິໂພກໃນທັນທີ.	
	0712	ພືດຜັກແຫ້ງ, ທັ້ງຕົ້ນ ຫຼື ທັ້ງຫົວ, ຕັດເປັນສ່ວນ, ເປັນຕ່ອນ, ບົດ ຫຼື ປົດ ເປັນຜົງລະອຽດກໍ່ຕາມ, ແຕ່ບໍ່ທັນປຸງແຕ່ງເປັນຢ່າງອື່ນ.	ເປັນຕົ້ນ
	0714	ຫົວມັນຕົ້ນ, ມັນເທດ, ມັນດ້ຳ, ສາເລບ, ເຈຣູຊາແລມ ອາຣຕິໂຊກ ແລະ ຮາກ ຫຼື ຫົວທີ່ມີລັກສະນະຄ້າຍຄຽງ ທີ່ມີທາດແປ້ງ, ສົດ, ແຊ່ເຢັນ, ແຊ່ແຂງ ຫຼື ແຫ້ງ, ເຖິງ ແມ່ນວ່າຈະຕັດເປັນຕ່ອນ ຫຼື ລັກສະນະເປັນເມັດ, ເປັນກ້ອນ; ໃນຂອງສາຄູ ຫຼື ບໍ່ກໍ່ ຕາມ.	ເປັນຫົວ, ທີ່ບໍ່ໄດ້ທັນໄດ້ ປອກເປືອກ
	0801	ໝາກພ້າວ, ໝາກໄມ້ເປືອກແຂງພັນບຣາຊິລ, ແກ່ນໝາກມ່ວງຫິມະ ພານ, ສົດ ຫຼື ແຫ້ງ, ບໍ່ມີເປືອກ ຫຼື ແກະເອົາເປືອກອອກ ຫຼື ບໍ່ກໍ່ຕາມ.	ເປັນໜ່ວຍສົດ ຫຼື ແຫ້ງ, ບໍ່ມີເປືອກ ຫຼື ແກະເອົາ ເປືອກອອກ ຫຼື ບໍ່ກໍ່ຕາມ.
	0802	ໝາກໄມ້ເປືອກແຂງອື່ນໆ, ສົດ ຫຼື ແຫ້ງ, ຈະເອົາເປືອກອອກ ຫຼື ບໍ່ກໍ່ຕາມ.	ເປັນໜ່ວຍສົດ ຫຼື ແຫ້ງ, ຈະເອົາ ເປືອກອອກ ຫຼື ບໍ່ກໍ່ຕາມ.
	0803	ໝາກກ້ວຍ, ລວມທັ້ງໝາກໄມ້ຕະກູນກ້ວຍ, ສົດ ຫຼື ແຫ້ງ.	ເປັນໜ່ວຍສົດ ຫຼື ແຫ້ງ.
	0804	ໝາກອິນທະຜະລຳ, ໝາກເດື່ອ, ໝາກນັດ, ໝາກອາໂວຄາໂດ, ໝາກສີດາ, ໝາກ ມ່ວງ ແລະ ໝາກມັງຄຸດ, ສົດ ຫຼື ແຫ້ງ.	ເປັນໜ່ວຍສົດ ຫຼື ແຫ້ງ.
	0805	ໝາກໄມ້ຈຳພວກໝາກກ້ຽງ, ສົດ ຫຼື ແຫ້ງ.	ເປັນໜ່ວຍສົດ ຫຼື ແຫ້ງ.
	0806	ອະງຸ່ນ, ສົດ ຫຼື ແຫ້ງ.	ເປັນໜ່ວຍສົດ ຫຼື ແຫ້ງ.
	0807	ໝາກແຕງ (ລວມທັ້ງໝາກແຕງໂມ) ແລະ ໝາກໜຸ່ງ, ສົດ.	ເປັນໜ່ວຍສົດ
	0808	ໝາກແອບເປີ້ນ, ໝາກແພຣ໌ ແລະ ໝາກຄວິນ, ສົດ.	ເປັນໜ່ວຍສົດ
	0809	ໝາກແອປຣິຄອດ, ໝາກເຊີຣີ, ໝາກຄາຍ (ລວມທັ້ງເນກທາຣິນ), ພລຳ ແລະ ສະ ໂລສ໌, ສົດ.	ເປັນໜ່ວຍສົດ
	0810	ໝາກໄມ້ອື່ນໆ, ສົດ.	ເປັນໜ່ວຍສົດ
	0811	ໝາກໄມ້, ໝາກໄມ້ເປືອກແຂງ, ບໍ່ທັນສຸກ ຫຼື ເຮັດໃຫ້ສຸກດ້ວຍການຕົ້ມ ຫຼື ດ້ວຍອາຍນ້ຳ, ແຊ່ແຂງ, ຈະໃສ່ນ້ຳຕານ ຫຼື ສານຫວານອື່ນ ຫຼື ບໍ່ກໍ່ ຕາມ.	ເປັນໜ່ວຍສົດ ບໍ່ທັນສຸກ ຫຼື ເຮັດ ໃຫ້ສຸກດ້ວຍ ການຕົ້ມ ທີ່ບໍ່ໃສ່ ນ້ຳຕານ ຫຼື ສານຫວານອື່ນ
	0812	ໝາກໄມ້ ແລະ ໝາກໄມ້ເປືອກແຂງທີ່ຮັກສາໄວ້ຊົ່ວຄາວ (ດ້ວຍອາຍ ມາດ ຫຼື ແຊ່ ນ້ຳເກືອ, ແຊ່ນ້ຳກຳມະຖັນ ຫຼື ໃສ່ສານກັນບູດອື່ນໆ ສຳລັບຮັກສາໄວ້ຊົ່ວຄາວເປັນ ຕົ້ນ), ໃນ ສະພາບທີ່ບໍ່ເໝາະສຳລັບການບໍລິ ໂພກໂດຍທັນທີ.	ເປັນໜ່ວຍ

	0813	ໝາກໄມ້ແຫ້ງ, ນອກຈາກໝາກໄມ້ຊະນິດທີ່ບົ່ງໄວ້ແຕ່ລະຫັດເຄົ້າ 08.01 ຫາ 08.06; ລວມທັ້ງໝາກໄມ້ເປືອກແຂງ ແລະ ໝາກໄມ້ແຫ້ງ ຢູ່ໃນໝວດນີ້ປະສົມກັນ.	ເປັນໜ່ວຍ
	0901	ກາເຟ, ຈະຂົ້ວ ຫຼື ແຍກຄາເຟອິນອອກ ຫຼື ບໍ່ກໍ່ຕາມ; ເປືອກ ແລະ ເຍື່ອ ກາເຟ; ຂອງແທນກາເຟທີ່ມີກາເຟປະສົມຢູ່, ຈະຢູ່ໃນອັດຕາສ່ວນປະສົມ ເທົ່າໃດກໍ່ຕາມ.	ກາເຟບໍ່ທັນຂົ້ວ, ບົດ, ຫຼື ແຍກ ຄາເຟອິນອອກ, ທີ່ໄດ້ປອກເປືອກ ຫຼື ບໍ່ກໍ່ຕາມ;
	0902	ຊາຈະປຸງແຕ່ງກິ່ນ ຫຼື ບໍ່ກໍ່ຕາມ.	ຊາສົດ ຫລື ຕາກແຫ້ງ, ຫລື ບໍ່ທັນໄດ້ປຸງແຕ່ງ ຫລື ບໍ່ກໍ່ຕາມ
	0904	ພິກໄທໃນຕະກູນໄປເປີ້ຣ໌ ລວມທັ້ງໝາກພິກໃນຕະກູນແຄບຊິກໍ່ ຫຼື ຕະ ກູນ ພິເມນຕາ; ທີ່ແຫ້ງ, ບົດ ຫຼື ເຮັດເປັນຜົງ.	ເປັນເມັດ, ຫລື ບໍ່ທັນໄດ້ບົດ ຫລື ເຮັດເປັນຜົງ
	0906	ອົບເຊີຍ ແລະ ດອກຕນອົບເຊີຍ.	ບໍ່ທັນໄດ້ບົດ ຫລື ເປັນຜົງ
	0907	ຕົ້ນໂຄລບສ໌ (ໝາກ, ດອກ ແລະ ກ້ານດອກ).	ບໍ່ທັນໄດ້ອົບ, ບົດ ຫລື ເປັນຜົງ
	0908	ໝາກຈັນເທດ, ດອກຈັນເທດ, ອາມອມ ແລະ ໝາກແໜ່ງ.	ເປັນເມັດ ບໍ່ທັນໄດ້ອົບ, ບົດ ຫລື ເປັນຜົງ
	0909	ເມັດອານິດ, ເມັດບາດຽນ, ເມັດຜັກຊີ, ເມັດຜັກອີຕູ່, ເມັດຄາຣາເວ, ເມັດ ຄິວມິນ ຫຼື ເມັດຈູນິເປີຣແບຣ໌ຣີ.	ບໍ່ທັນໄດ້ອົບ, ບົດ ຫລື ເປັນຜົງ
	0910	ຂີງ, ຫຍ້າຝຣັ່ນ, ຂີ້ໝົ້ນ (ເຄີຣີ່ຕມ), ຕົ້ນໄທມ໌, ໃບເບ, ຜົງກະຫຼີ ແລະ ເຄື່ອງເທດອື່ນໆ.	ບໍ່ທັນໄດ້ອົບ, ບົດ ຫລື ເປັນຜົງ
	10.05	ເຂົ້າສາລີ (ເຂົ້າໂພດ).	ສາລີດິບ, ບໍ່ທັນໄດ້ອົບ
	10.06	ເຂົ້າ.	ເປັນເມັດ, ມີເມັດ ຫັກບໍ່ເກີນ 25%
	10.07	ເຂົ້າຊໍກໍ່.	ເປັນເມັດ
	1201	ຖົ່ວເຫຼືອງ, ຈະບົດແຕກແລ້ວ ຫຼື ບໍ່ກໍ່ຕາມ.	ເປັນເມັດ, ທີ່ບໍ່ທັນໄດ້ເອົາ ເປືອກອອກ
	1202	ຖົ່ວດິນ, ບໍ່ທັນຂົ້ວ ຫຼື ບໍ່ທັນເຮັດໃຫ້ສຸກໂດຍວິທີອື່ນ, ຈະເອົາເປືອກອອກ ຫຼື ບົດ ແຕກແລ້ວ ຫຼື ບໍ່ກໍ່ຕາມ.	ເປັນຫົວ ຫລື ເປັນເມັດ ທີ່ໄດ້ ເອົາເປືອກອອກ ຫລື ບໍ່ກໍ່ຕາມ, ຍັງບໍ່ທັນໄດ້ເອົາ ເປືອກອອກ ແລະ ບໍ່ທັນກິນໄດ້ເທື່ອ

5	1204.00.00	ເມັດປ່ານ, ຈະບິດແຕກແລ້ວ ຫຼື ບໍ່ກໍ່ຕາມ.	ເປັນເມັດ ທີ່ບໍ່ທັນເອົາເປືອກອອກ
	1205	ເມັດເຣບ ຫຼື ເມັດໂຄລຊາ, ຈະບິດແຕກແລ້ວ ຫຼື ບໍ່ກໍ່ຕາມ.	ເປັນເມັດ ທີ່ບໍ່ທັນເອົາເປືອກອອກ, ບໍ່ທັນກິນໄດ້ເທື່ອ
6	1206.00.00	ແກ່ນດອກຕະເວັນ, ຈະບິດແຕກແລ້ວ ຫຼື ບໍ່ກໍ່ຕາມ.	ເປັນເມັດ ທີ່ບໍ່ທັນເອົາເປືອກອອກ, ບໍ່ທັນກິນໄດ້ເທື່ອ
	1207	ແກ່ນພືດ ແລະ ແກ່ນໝາກໄມ້ອື່ນໆ ທີ່ມີນ້ຳມັນ, ຈະບິດແຕກແລ້ວ ຫຼື ບໍ່ກໍ່ຕາມ.	ຍົກເວັ້ນເມັດຝ້າຍ (1207.91.00);
	1211	ຕົ້ນໄມ້ ແລະ ພາກສ່ວນຂອງຕົ້ນໄມ້ (ລວມທັງເມັດ ແລະ ໝາກໄມ້), ຊະນິດທີ່ໃຊ້ ຕົ້ນຕໍ ໃນການເຄື່ອງນ້ຳຫອມ, ໃນທາງການຢາ ຫຼື ໃຊ້ໃນການຂ້າແມງໄມ້, ຢາຂ້າເຊື້ອຣາ ຫຼື ຈຸດປະສົງທີ່ຄ້າຍຄືກັນ, ສົດ ຫຼື ແຫ້ງ, ຈະຕັດ, ບົດ ຫຼື ເຮັດເປັນຜົງລະອຽດແລ້ວ ຫຼື ບໍ່ກໍ່ຕາມ.	ສົດ ຫລື ຕາກແຫ້ງ, ທີ່ບໍ່ທັນໄດ້ເອົາເປືອກ ຫລື ບໍ່ທັນກິນໄດ້ເທື່ອ
	1212	ໝາກຖົ່ວໂລຄັສ, ສາຫ່ຽຍທະເລ ແລະ ສາຫ່ຽຍທະເລອື່ນໆ, ຜັກກາດຫວານ ທີ່ໃຫ້ນ້ຳ ຕານ ແລະ ອ້ອຍສົດ, ແຊ່ເຢັນແຊ່ແຂງ ຫຼື ແຫ້ງ, ຈະບິດເປັນຜົງ ຫຼື ບໍ່ກໍ່ ຕາມ; ເມັດແຂງ ແລະ ເນື້ອໃນຂອງແກ່ນໝາກໄມ້ ແລະ ຜະລິດຕະພັນອື່ນໆ ທີ່ໄດ້ຈາກພືດຜັກ (ລວມທັງຮາກຊິໂຄຣີບໍ່ທັນ ຂົ້ວ, ຊະນິດຊິໂຄຣຽມ ອິນທີບັສຊາຕິວຸມ) ໃຊ້ເປັນອາຫານຄົນເປັນຕົ້ນ ຕໍ, ທີ່ບໍ່ໄດ້ລະບຸ ຫຼື ລວມໄວ້ໃນບ່ອນອື່ນ.	ສົດ ຫລື ຕາກແຫ້ງ; ທີ່ບໍ່ທັນໄດ້ຕັດ, ບົດ ຫລື ເປັນຜົງ ກໍ່ຕາມ
7	1213.00.00	ເຟືອງ ແລະ ກາກຂອງທັນຍາພືດ, ທີ່ບໍ່ທັນຕົບແຕ່ງ, ຈະຫັ່ນ, ບົດ, ອັດ ຫຼື ເຮັດໃຫ້ເກາະກ້ອນໃນຮູບເມັດກົມແບບເພລເລດທ໌ ຫຼື ບໍ່ກໍ່ຕາມ.	ສົດ ຫລື ແຫ້ງ; ບໍ່ທັນໄດ້ຕັດ, ບົດ, ຫລື ເປັນຜົງ
	12.14	ຜັກກາດໃຊ້ເປັນອາຫານສັດ, ຮາກພືດໃຊ້ເປັນອາຫານສັດ, ເຟືອງ, ຫຍ້າ, ຫຍ້າ ແຫ້ງລ້ຽງສັດ, ຜັກກະຫຼ່ຳລ້ຽງສັດ ແລະ ຜະລິດຕະພັນອາຫານສັດ ອື່ນໆ ທີ່ຄ້າຍຄືກັນ, ຈະເຮັດເກາະກ້ອນ, ເປັນຮູບເມັດກົມແບບພິລເລດທ໌ ຫຼື ບໍ່ກໍ່ຕາມ.	ເປັນຫົວ, ເປັນຕົ້ນ
	1301	ຂີ້ຄັ່ງກັ່ງ; ຢາງໄມ້ທຳມະຊາດ, ຢາງຂອງຕົ້ນສົນ, ຢາງໄມ້ປະສົມ ແລະ ຢາງສົນ ໂອລີ ໂອເຣຊິນ (ຕົວຢ່າງ, ຢາງຫອມທຳມະຊາດ).	ບໍ່ທັນໄດ້ຜ່ານການປຸງແຕ່ງ
	1401	ວັດຖຸຈາກພືດຈຳພວກໃຊ້ຕນຕໍໃນການຈັກສານ ຫຼື ເຄື່ອງເຮັດດ້ວຍມື (ຕົວຢ່າງ, ໄມ້ໄຜ່, ຫວາຍ, ອໍ້, ຄ້າ, ຫວາຍເຄືອ, ຕົ້ນປານ, ຫຍ້າຈາກທັນຍາພືດ, ທີ່ເຮັດໃຫ້ສະອາດ, ຟອກ ຫຼື ຍ້ອມສີ, ເປືອກຕົ້ນໄລມ໌).	ບໍ່ທັນຟອກ, ບໍ່ທັນຍ້ອມ
8	1404.90.90	- - ອື່ນໆ	
	15.11	ນ້ຳມັນປານ ແລະ ເສດເຫຼືອຂອງສິ່ງດັ່ງກ່າວ, ຈະກັ່ນກອງແລ້ວ ຫຼື ບໍ່ກໍ່ຕາມ, ແຕ່ບໍ່ທັນດັດແປງທາງເຄມີ.	
9	1511.10.00	- ນ້ຳມັນດິບ	ກິໂລ
	1511.90	- ອື່ນໆ:	ກິໂລ

		- - ສິ່ງເສດເຫຼືອຂອງນ້ຳມັນ ທີ່ຍັງບໍ່ທັນເຮັດໃຫ້ບໍລິສຸດ:	
10	1511.90.11	- - ສິ່ງເສດເຫຼືອທີ່ເປັນຂອງແຂງ	ກິໂລ
11	1511.90.19	- - - ອື່ນໆ	ກິໂລ
		- - ອື່ນໆ:	
12	1511.90.91	- - - ສິ່ງເສດເຫຼືອທີ່ເປັນຂອງແຂງ	ກິໂລ
13	1511.90.92	- - - ອື່ນໆ, ຫຸ້ມຫໍ່ໂດຍມີນ້ຳໜັກຈິງບໍ່ເກີນ 20 ກິໂລກຣາມ	ກິໂລ
14	1511.90.99	- - - ອື່ນໆ	ກິໂລ
	15.13	ນ້ຳມັນໝາກພ້າວ, ນ້ຳມັນປາມ ຫຼື ນ້ຳມັນບາບາດູ ແລະ ເສດເຫຼືອຂອງ ສິ່ງດັ່ງກ່າວ ຫຼື ບໍ່ກ່ຕາມ, ແຕ່ບໍ່ທັນດັດແປງທາງເຄມີ.	
		- ນ້ຳມັນໝາກພ້າວ ແລະ ເສດເຫຼືອຂອງສິ່ງດັ່ງກ່າວ:	
	1513.21	- - ນ້ຳມັນດິບ	
15	1513.21.10	- - - ນ້ຳມັນປາມ	
16	1513.21.90	- - - ອື່ນໆ	
	1513.29	- - ອື່ນໆ:	
		- - - ສິ່ງເສດເຫຼືອຂອງນ້ຳມັນເນື້ອໃນເມັດປາມ ຫຼື ບາບາດູ, ທີ່ຍັງບໍ່ທັນ ເຮັດໃຫ້ບໍລິສຸດ:	
17	1513.29.11	- - - - ສິ່ງເສດເຫຼືອຂອງນ້ຳມັນເນື້ອໃນເມັດປາມ ທີ່ຍັງບໍ່ທັນເຮັດໃຫ້ບໍລິສຸດ	
18	1513.29.12	- - - - ສິ່ງເສດເຫຼືອຂອງນ້ຳມັນບາບາດູ ທີ່ຍັງບໍ່ທັນເຮັດໃຫ້ບໍລິສຸດ	
19	1513.29.13	- - - - ອື່ນໆ, ສິ່ງເສດເຫຼືອຂອງນ້ຳມັນເນື້ອໃນເມັດປາມໂອລິນ, ທີ່ຍັງບໍ່ທັນເຮັດ ໃຫ້ບໍລິສຸດ	
20	1513.29.14	- - - - ອື່ນໆ, ສິ່ງເສດເຫຼືອຂອງນ້ຳບາບາດູ ທີ່ຍັງບໍ່ທັນເຮັດໃຫ້ບໍລິສຸດ	
		- - - ອື່ນໆ:	
21	1513.29.91	- - - - ສິ່ງເສດເຫຼືອຂອງນ້ຳມັນປາມທີ່ເຮັດໃຫ້ແຂງ	
22	1513.29.92	- - - - ສິ່ງເສດເຫຼືອຂອງນ້ຳບາບາດູ ທີ່ເຮັດໃຫ້ແຂງ	
23	1513.29.94	- - - - ນ້ຳມັນປາມໂອລິນ, ເຮັດໃຫ້ບໍລິສຸດ, ຟອກ ແລະ ກຳຈັດກິ່ນ ແລ້ວ	
24	1513.29.95	- - - - ນ້ຳມັນເມັດປາມ, ເຮັດໃຫ້ບໍລິສຸດ, ຟອກ ແລະ ກຳຈັດກິ່ນແລ້ວ	
25	1513.29.96	- - - - ອື່ນໆ, ນ້ຳມັນປາມ	
26	1513.29.97	- - - - ອື່ນໆ, ນ້ຳມັນບາບາດູ	
27	1801.00.00	ເມັດໂກໂກ້, ເປັນເມັດ ຫຼື ເປັນເມັດທັກ, ດິບ ຫຼື ຂັ້ວແລ້ວ.	ເມັດເມັດ ບໍ່ທັນ ເອົາເປືອກອອກ, ດິບ
	4001	ຢາງທຳມະຊາດ, ບາລາຕາ, ກັດຕາ-ເປີຣ໌ຊາ, ກວາຍູ, ຊີເຄີລ ແລະ ຢາງຍືດທຳມະຊາດຄ້າຍຄຽງ, ໃນຮູບແບບລັກສະນະຂັ້ນຕົ້ນ ຫຼື ເປັນ ແຜ່ນ, ໃບ ຫຼື ແຜ່ນຍາວ.	ຢາງທຳມະ ຊາດ, ໃນຮູບ ແບບລັກສະນະ ຂັ້ນຕົ້ນ, ຢາງ ຍືດທຳມະຊາດ ຄ້າຍຄຽງ,
	5303	ປ໋ຈຸດ ແລະ ໄຍຕ່ຳແຜ່ນຈາກເປືອກໃນຂອງຕົ້ນໄມ້ອື່ນໆ (ຍົກເວັ້ນປ່ານ	ປ໋ຈຸດ ແລະ ໄຍ

		ລິນິນ, ປ່ານແທ້ ແລະ ປ່ານຣາມີ), ດິບ ຫຼື ຜ່ານກຳມະວິທີແລ້ວ ແຕ່ບໍ່ໄດ້ ລັງເສັ້ນໄຍທີ່ບໍ່ໄດ້ຂະໜາດ ແລະ ເສດຂອງໄຍເຫຼົ່ານີ້ (ລວມ,ທັ້ງເສດຂອງ ເສັ້ນ ແລະ ກຸ່ມໄຍທີ່ສາງໄດ້ ຈາກວັດຖຸເຮັດດ້ວຍໄຍດັ່ງກ່າວ).	ຕ່ຳແຜ່ນຈາກ ເປືອກໃນຂອງ ຕົ້ນ ທີ່ເປັນ ວັດຖຸດິບ ແລະ ບໍ່ທັນໄດ້ເຮັດເປັນ ເສັ້ນເທື່ອ
28	5305.00.10	- ເສັ້ນໃຍປ່ານໄຊຊອລ ແລະ ເສັ້ນໃຍຕ່ຳແຜ່ນຂອງພືດອື່ນໆ ໃນຕະກູນອະກາ ເວ; ເສັ້ນ ໃຍທີ່ບໍ່ໄດ້ຂະໜາດ ຫຼື ເສດຂອງເສັ້ນ ໃຍເຫຼົ່ານີ້ (ລວມທັ້ງເສດດ້າຍ ແລະ ກຸ່ມໃຍທີ່ສາງ ຈາກເສດວັດ ຖຸດ້ວຍເສັ້ນໃຍດັ່ງກ່າວ)	

ເອກະສານຊ້ອນທ້າຍ 03

ສິນຄ້າທີ່ບໍ່ຕ້ອງເສຍພາສີນຳເຂົ້າ ເມື່ອນຳເຂົ້າໄປຫວຽດນາມ

ລຳດັບ	HS Code AHTN 2012	ເນື້ອໃນລະອຽດ	ໝາຍເຫດ
	01.02	ສັດປະເພດງົວຄວາຍທີ່ມີຊີວິດ.	
		- ງົວ:	
1	0102.21.00	- - ສາຍພັນບໍລິສຸດສຳລັບເຮັດພັນ	ເປັນໂຕ
	0102.29	- - ອື່ນໆ:	
2	0102.29.10	- - - ງົວເຖິກ (ລວມທັ້ງງົວຕອນ)	ເປັນໂຕ
3	0102.29.90	- - - ອື່ນໆ	ເປັນໂຕ
		- ຄວາຍ:	
4	0102.31.00	- - ສາຍພັນບໍລິສຸດສຳລັບເຮັດພັນ	ເປັນໂຕ
5	0102.39.00	- - ອື່ນໆ	ເປັນໂຕ
	0102.90	- ອື່ນໆ:	
6	0102.90.10	- - ສາຍພັນບໍລິສຸດສຳລັບເຮັດພັນ	ເປັນໂຕ
7	0102.90.90	- - ອື່ນໆ	ເປັນໂຕ
	10.06	ເຂົ້າ.	
	1006.10	- ເຂົ້າເປືອກ	
8	1006.10.90	- - ອື່ນໆ	
	17.01	ນ້ຳຕານທີ່ໄດ້ຈາກອ້ອຍ ຫຼື ຈາກຫົວຜັກກາດຫວານ ແລະ ນ້ຳຕານຊູໂຄຣສ ບໍລິສຸດທາງເຄມີ, ໃນສະພາບເປັນກ້ອນແຂງ.	
		- ນ້ຳຕານດິບ ທີ່ບໍ່ໄດ້ຕື່ມສານປຸງແຕ່ງລົດຫອມ ຫຼື ສານແຕ່ງສີ:	
9	1701.13.00	- - ນ້ຳຕານທີ່ໄດ້ຈາກອ້ອຍ ຕາມທີ່ໄດ້ລະບຸໄວ້ໃນຂໍ້ແນະນຳຍ່ອຍ 2 ຂອງໝວດນີ້	
10	1701.14.00	- - ນ້ຳຕານທີ່ໄດ້ຈາກອ້ອຍ	
		- ອື່ນໆ:	
11	17.01.91.00	- - ທີ່ຕື່ມສານປຸງແຕ່ງກິ່ນ ຫຼື ສານແຕ່ງສີ	
	1701.99	- - ອື່ນໆ:	
		- - - ນ້ຳຕານບໍລິສຸດ:	
12	1701.99.11	- - - - ສີຂາວ	
13	1701.99.19	- - - - ອື່ນໆ	
14	1701.99.90	- - - ອື່ນໆ	
	24.01	ຢາສູບທີ່ບໍ່ທັນທຳການຜະລິດ ຫຼື ບໍ່ທັນສຳເລັດຮູບ, ເສດຢາສູບ.	
15	2401.10	- ຢາສູບ, ທີ່ບໍ່ທັນໄດ້ເອົາກ້ານ ຫຼື ໃບອອກ:	
16	2401.20	- ໃບຢາສູບ, ທີ່ເອົາກ້ານ ຫຼື ໃບອອກພຽງແຕ່ບາງສ່ວນ ຫຼື ທັ້ງໝົດ:	
17	2401.30	- ເສດຂອງຢາສູບ:	

AGREEMENT
ON BORDER TRADE
BETWEEN
THE GOVERNMENT OF THE SOCIALIST REPUBLIC OF VIET NAM
AND
THE GOVERNMENT OF LAO PEOPLE'S DEMOCRATIC REPUBLIC

The Government of the Socialist Republic of Viet Nam and the Government of the Lao People's Democratic Republic (hereinafter in this Agreement referred to as the "Parties");

Inspired by the relations of the traditional friendship and special solidarity which exist between them, and their shared regional interests and ties;

Recalling to the Trade Agreement between the Government of the Socialist Republic of Viet Nam and the Government of the Lao People's Democratic Republic, done at Vientiane Capital on 3rd March 2015 and the Agreement on Bilateral Cooperation between the Government of the Socialist Republic of Viet Nam and the Government of the Lao People's Democratic Republic, done at Ha Noi on 21st January 2015;

Desiring to develop border trade in order to strengthen the bilateral relations between the two countries, and to improve living standard of people living in border areas of the two countries;

Have agreed as follows:

Article 1
Objectives

1. To grant distinctive preferential treatment for border trade between the two Parties, making contribution to stimulating bilateral trade volume between Viet Nam and Lao PDR, and to enhancing the economic - commercial cooperation and intergration within ASEAN and the Greater Mekong Sub-Region (GMS).

2. To develop the border checkpoints between Viet Nam and Lao PDR as gateways and bridges for goods circulation among regional countries and the rest of the world as well as for trade facilitation in the region.

3. To strengthen cross-border cooperation on trade and investment between Viet Nam and Lao PDR, contributing to further consolidate the

relations of traditional friendship, special solidarity and comprehensive cooperation between Viet Nam and Lao PDR.

4. To foster close relations between border provinces of the two countries in economic, commercial, social and cultural areas, contributing to translate the land border line running along the two countries into the border of exchange, peace, stability, friendship, cooperation and sustainable development.

5. To intensify the socio-economic development and poverty alleviation, especially for ethnic communities in the mountainous, remote and border areas of the two countries, contributing to maintain the security, national defence and social order at the border line between the two countries.

Article 2

Border Trade

Border trade operations as defined in this Agreement include:

1. Operations on selling and buying or exchanging goods by border traders.

2. Operations on selling and buying or exchanging goods by border residents.

3. Operations on selling and buying or exchanging goods by border traders and border residents at border markets.

4. Activities of supportive services for border trade and trade facilitation at the border checkpoints.

Article 3

